JIN ASEAN

UNDP



# ບົດບາດຍິງຊາຍ ແລະ ຄວາມເປັນເລີດ ທາງດ້ານຕຸລາການ

ເຄືອຂ່າຍຄວາມຊື່ສັດທ່ຽງທຳດ້ານຕຸລາການອາຊຽນ

ອົງການ UNDP ແມ່ນອົງການແຖວໜ້າຂອງອົງການສະຫະປະຊາຊາດທີ່ຕໍ່ສູ້ເພື່ອຍຸດຕິຄວາມທຸກຍາກ, ຄວາມບໍ່ສະເໝີພາບ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ. ການເຮັດວຽກຮ່ວມກັບເຄືອຂ່າຍໃນວົງກວ້າງຂອງພວກເຮົາກັບບັນດາຜູ້ຊ່ຽວຊານ ແລະ ຄູ່ຮ່ວມງານຢູ່ໃນ 170 ປະເທດ, ພວກເຮົາຊ່ວຍເຫຼືອປະເທດຕ່າງໆໃນການຊອກຫາວິທີແກ້ໄຂແບບເຊື່ອມສານ ແລະ ມີຄວາມທົນທານສຳລັບຜູ້ຄົນແລະໂລກ.

ສາມາດຮຽນຮູ້ເພີ່ມເຕີມໄດ້ທີ່ undp.org ຫຼື ຕິດຕາມ @UNDP.

ຜົນການສຶກສາ, ການຕີຄວາມໝາຍ ແລະ ທັດສະນະທີ່ນຳສະເໜີໃນສື່ສິ່ງພິມນີ້ແມ່ນເປັນຂອງບັນດາຜູ້ຂຽນ ແລະ ບໍ່ຈຳເປັນຕ້ອງເປັນຕົວແທນຂອງອົງການສະຫະປະຊາຊາດ, ລວມທັງອົງການ UNDP, ຫຼື ບັນດາລັດພາຄີຂອງອົງການສະຫະປະຊາຊາດ.

ສະຫງວນລິຂະສິດ © UNDP 2021
ສິດທິທັງໝົດແມ່ນຖືກສະຫງວນໄວ້.

ສຳລັບຂໍ້ມູນເພີ່ມເຕີມ, ສາມາເຂົ້າໄປຫນ້າເວັບຂອງພວກເຮົາ: Judicial Integrity Network in ASEAN Webpage

# ຂໍຂອບໃຈ ສະແດງຄວາມຮູ້ບຸນຄຸນ

ຊຸດເຄື່ອງມືນີ້ແມ່ນໄດ້ຮັບການມອບໝາຍໃນປີ 2021 ໂດຍອົງການ UNDP ຫ້ອງການພາກພື້ນທີ່ບາງກອກ ພາຍໃຕ້ຂອບວຽກຂອງໂຄງການລະດັບພາກພື້ນທີ່ກ່ຽວກັບ “ຄວາມເປັນເລີດຂອງສານເພື່ອຮັບປະກັນຄວາມຍຸຕິທໍາສໍາລັບທຸກຄົນ: ເຄືອຂ່າຍຄວາມທ່ຽງທໍາດ້ານຕຸລາການໃນອາຊຽນ.”

ຜູ້ນໍາທີມໃນການຂຽນ ແມ່ນ Sarah McCoubrey (ຂັ້ນຕອນການແກ້ໄຂແບບ CALIBRATE), ຜູ້ຊ່ຽວຊານດ້ານຄວາມຊື່ສັດຂອງຕຸລາການ.

ການພັດທະນາຜະລິດຕະພັນດ້ານຄວາມຮູ້ນີ້ໄດ້ຖືກປະສານສົມທົບໂດຍ Liviana Zorzi, ຜູ້ຊ່ຽວຊານຂອງໂຄງການດ້ານຄວາມໂປ່ງໃສ & ຄວາມຮັບຜິດຊອບຈາກອົງການ UNDP. ອອກແບບການຈັດໜ້າໂດຍ Pundaree Boonkerd.

ຊຸດເຄື່ອງມືນີ້ໄດ້ຮັບປະໂຫຍດຈາກຄໍາຄິດເຫັນອັນເລິກເຊິ່ງຈາກ: Nicholas Booth, ຫົວໜ້າທີມການຄຸ້ມຄອງຈັດການຂອງອົງການ UNDP ແລະ ຈາກບັນດາສະມາຊິກຂອງກຸ່ມທີ່ປຶກສາຂອງເຄືອຂ່າຍຍຸຕິທໍາອາຊຽນ ໂດຍປະກອບມີ:

- Lawrence Glanfield AM
- Dr Nihal Jayawickrama
- The Hon. Michael Kirby AC CMG
- Jennifer Marie
- The Hon. Murray Kellam AO QC

## ຄູ່ຮ່ວມງານຜູ້ໃຫ້ທຶນ

ການສຶກສາຄົ້ນຄວ້ານີ້ແມ່ນສາມາດດໍາເນີນໄດ້ເນື່ອງຈາກໄດ້ຮັບການປະກອບສ່ວນຂອງລັດຖະບານສະຫະລັດ, ສໍານັກງານປາບປາມຢາເສບຕິດສາກົນ ແລະ ການບັງຄັບໃຊ້ກົດໝາຍ (INL).

# ສາລະບານ


ບົດບາດຍິງຊາຍ ແລະ ຄວາມເປັນເລີດທາງດ້ານຕຸລາການ 5

ບົດບາດຍິງຊາຍໃນພາກພື້ນອາຊຽນ 7

ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ກັບລະບົບກົດໝາຍ 11

ສັງລວມບັນຫາໂດຍຫຍໍ້ 1: ບົດບາດຍິງຊາຍ ແລະ ການເຂົ້າເຖິງຄວາມຍຸຕິທຳ 13

ສັງລວມບັນຫາໂດຍຫຍໍ້ 2: ຄວາມເຊື່ອກ່ຽວກັບບົດບາດຍິງຊາຍ ແລະ ການຈຳແນກຢູ່ໃນຫ້ອງໄຕ່ສວນ 15

ສັງລວມບັນຫາໂດຍຫຍໍ້ 3: ບົດບາດຍິງຊາຍທີ່ເປັນແນວຄວາມຄິດແບບກວມລວມ 19

ສັງລວມບັນຫາໂດຍຫຍໍ້ 4: ການແກ້ໄຂບັນຫາການຈຳແນກທາງເພດໃນການຕັດສິນທາງດ້ານກົດໝາຍ 21

ສັງລວມບັນຫາໂດຍຫຍໍ້ 5: ການເປັນຕົວແທນດ້ານບົດບາດຍິງຊາຍໃນລະບົບຕຸລາການ 23

ສັງລວມບັນຫາໂດຍຫຍໍ້ 6: ການຂູດຮີດທາງເພດ 26

ສັງລວມບັນຫາໂດຍຫຍໍ້ 7: ການລ່ວງລະເມີດທາງເພດ ແລະ ການປະພຶດຜິດທາງເພດ 29

ເອກະສານຊ້ອນທ້າຍ 32

# ບົດບາດຍິງຊາຍ ແລະ ຄວາມເປັນເລີດທາງດ້ານຕຸລາການ

ບັນຫາກ່ຽວກັບບົດບາດຍິງຊາຍສາມາດເກີດຂຶ້ນຢູ່ໃນສານທີ່ມີຜູ້ພິພາກສາ, ໃນທຸກລະດັບຂອງສານ, ໂດຍຜູ້ດຳເນີນງານໃນສານ ແລ ະໃນທຸກຂັ້ນຕອນຂອງອາຊີບຜູ້ພິພາກສາ ບໍ່ວ່າຈະເປັນຊາຍຫຼືຍິງ. ບັນຫາບົດບາດຍິງຊາຍມັກຈະຖືກຍົກອອກມາເປັນບັນຫາຂອງແມ່ຍິງ ຫຼື ພຽງແຕ່ຄິດວ່າກ່ຽວຂ້ອງໃນຄະດີທີ່ກ່ຽວຂ້ອງກັບຄອບຄົວ ຫຼື ໃນເວລາທີ່ແມ່ຍິງເປັນຜູ້ດຳເນີນຄະດີ. ໃນຄວາມເປັນຈິງ, ສົມມຸດຖານກ່ຽວກັບບົດບາດຍິງຊາຍ ມີຜົນກະທົບຕໍ່ແມ່ຍິງແລະຜູ້ຊາຍ, ເຊັ່ນດຽວກັນກັບຄອບຄົວຂອງພວກເຂົາ. ຄົນຂ້າມເພດ, ຜູ້ມີສອງເພດ ແລະ ຜູ້ທີ່ມີຄວາມຫຼາກຫຼາຍທາງເພດປະສົບກັບການຈຳແນກທາງເພດ. ພະນັກງານສານ, ເຈົ້າຫນ້າທີ່ຕຳຫລວດ, ພະຍານຜູ້ຊ່ຽວຊານ ແລະທະນາຍຄວາມທັງຫມົດ ອາດຈະນຳເອົາທັດສະນະຄະຕິທາງດ້ານບົດບາດຍິງຊາຍເຂົ້າໄປໃນການດຳເນີນງານຂອງພວກເຂົາຫຼືວິທີການທີ່ພວກເຈົ້ານຳສະເຫນີຫຼັກຖານ.

ເອກະລັກ ແລະ ປະສົບການທີ່ແຕກຕ່າງກັນຂອງປະຊາຊົນ ຫຼື ມີປະຕິສຳພັນທີ່ສະແດງເຖິງຄວາມບໍ່ສະເໝີພາບທີ່ພວກເຂົາໄດ້ປະເຊີນ. ການເຊື່ອທາງດ້ານບົດບາດຍິງຊາຍແມ່ນສ່ວນໜຶ່ງຂອງການຈຳແນກທີ່ຜູ້ດ້ອຍໂອກາດໄດ້ປະສົບພົບພໍ້, ລວມທັງກຸ່ມຄົນ LGBTI+, ຄົນພິການ, ຜູ້ລີ້ໄພ ແລະ ຊາວອົບພະຍົບ. ການຮັບຮູ້ກ່ຽວກັບການພົວພັນເຊິ່ງກັນແລະກັນທາງດ້ານບົດບາດຍິງຊາຍທີ່ມີເຊື້ອຊາດ, ຊົນເຜົ່າ, ລົດນິຍົມທາງເພດ, ອາຍຸ ຫຼື ຄວາມພິການ ແມ່ນສ່ວນຫນຶ່ງຂອງຄວາມເປັນຈິງໃນບໍລິບົດຂອງຄະດີທາງກົດຫມາຍ. ຜົນກະທົບຂອງການຈຳແນກທາງເພດແມ່ນແຕກຕ່າງກັນ, ຂຶ້ນກັບສະຖານະການຂອງແຕ່ລະຄົນ. ຄວາມເຂົ້າໃຈກ່ຽວກັບບົດບາດຍິງຊາຍແລະຜົນກະທົບຂອງການມີສົມມຸດຖານກ່ຽວກັບບົດບາດຍິງຊາຍແມ່ນຍັງຄົງມີເລື້ອຍໆ. ໃນຂະນະທີ່ສະມາຊິກຂອງສັງຄົມຫັນໄປສູ່ຄວາມເຂົ້າໃຈທີ່ເທົ່າທຽມກັນກ່ຽວກັບບົດບາດຍິງຊາຍ, ຜູ້ພິພາກສາມັກຈະຢູ່ແຖວຫນ້າໃນການຮັບປະກັນໃຫ້ສິດທິພື້ນຖານຂອງທຸກໆຄົນໄດ້ຮັບການປົກປ້ອງ.

ຫຼັກການ Bangalore ຈັນຍາບັນຂອງຕຸລາການ ໄດ້ກຳນົດ 6 ຄຸນຄ່າທີ່ເປັນພື້ນຖານຂອງຄວາມເປັນເລີດທາງດ້ານຕຸລາການ. ເມື່ອປະຕິບັດຮ່ວມກັນ, ຄຸນຄ່າເຫຼົ່ານີ້ເປັນພື້ນຖານສຳລັບການສ້າງ ແລະ ຮັກສາຄວາມເຊື່ອຫມັ້ນຂອງປະຊາຊົນໃນການຕັດສິນຂອງສານ ແລະ ການປົກປ້ອງພາລະບົດບາດທີ່ສຳຄັນຂອງຜູ້ພິ ພາກສາໃນການສົ່ງເສີມລະບຽບກົດຫມາຍແລະການເຂົ້າເຖິງຄວາມຍຸຕິທຳ, ທັງໃນການຕັດສິນ ແລະການຄຸ້ມຄອງຫ້ອງໄຕ່ສວນຂອງຕຸລາການ.

ຄຸນຄ່າທີ່ກຳນົດໄວ້ໃນຫຼັກການຂອງ Bangalore ປະກອບມີ **ຄວາມເປັນເອກະລາດ, ຄວາມທ່ຽງທຳ, ຄວາມສັດຊື່, ຄວາມເໝາະສົມ, ຄວາມສະເໝີພາບ ແລະ ຄວາມອາດສາມາດແລະຄວາມພາກພຽນ** ລ້ວນແຕ່ມີຄວາມໝາຍທາງເພດ. ໃນຂະນະທີ່ຜູ້ພິພາກສາລວມເອົາຄຸນຄ່າເຫຼົ່ານີ້, ທັງສ່ວນບຸກຄົນແລະໃນຖານະສານການເອົາໃຈໃສ່ຕໍ່ການຈຳແນກທາງເພດ ແລະ ການຂົ່ມຂູ່ທາງເພດແມ່ນສິ່ງທີ່ ຈຳເປັນ.[1]

**ຄວາມເປັນເອກະລາດ, ຄວາມທ່ຽງທຳ, ແລະ ຄວາມຊື່ສັດ** ລ້ວນແຕ່ຮຽກຮ້ອງໃຫ້ຜູ້ພິພາກສາປະຕິບັດໂດຍບໍ່ມີຄວາມລຳອຽງ ຫຼືບໍ່ມີອິດທິພົນຈາກສິ່ງທີ່ຍຶດຕິດແບບເດີມ ຫຼື ຄວາມເຊື່ອທີ່ມີລັກສະນະຈຳແນກ. ການຕັດສິນຂອງຜູ້ພິພາກສາຈະຕ້ອງບໍ່ການຕັດສິນກ່ອນ ແລະ ຕ້ອງບໍ່ມີອິດທິພົນໃດໆກໍຕາມທີ່ອີງໃສ່ເຫດຜົນທີ່ບໍ່ກ່ຽວຂ້ອງ ລວມທັງການມີອັກຄະຕິທີ່ກ່ຽວຂ້ອງກັບເພດ, ບົດບາດຍິງຊາຍ, ລົດນິຍົມທາງເພດ ຫຼື ອັດຕະລັກທາງເພດ. ຜູ້ພິພາກສາຈະຕ້ອງສະແດງໃຫ້ເຫັນວ່າປະຕິເສດແນວຄວາມຄິດອັກຄະຕິທີ່ຍົກຂຶ້ນມາໂດຍພະຍານຫຼືທະນາຍຄວາມແລະມີການຕັດສິນຢ່າງໂປ່ງໃສ, ອີງໃສ່ຫຼັກຖານເທົ່ານັ້ນ, ບໍ່ແມ່ນຄວາມເຊື່ອແລະສົມມຸດຕິຖານຂອງຕົນເອງຫຼືຄົນອື່ນ.

**ຄວາມເໝາະສົມ** ຮຽກຮ້ອງໃຫ້ຜູ້ພິພາກສາປະຕິບັດຕົນເອງທັງຢູ່ໃນສານ ແລະນອກສານ, ໃນລັກສະນະທີ່ເຮັດໃຫ້ເສື່ອມເສຍ ແລະ ສະໜັບສະໜູນຄວາມເຊື່ອໝັ້ນຂອງປະຊາຊົນໃນການຕັດສິນທີ່ຍຸດຕິທຳ, ໂປ່ງໃສ. ການຂູດຮີດທາງເພດ, ການຂົ່ມເຫັງທາງເພດ ແລະ ການກະທຳທີ່ຈຳແນກແມ່ນຢູ່ຕໍ່າກວ່າຄວາມຄາດຫວັງນີ້. ການມີສ່ວນຮ່ວມ ຫຼື ສົ່ງເສີມການສົນທະນາທີ່ຈຳແນກ ເຊິ່ງເຮັດໃຫ້ເກີດຄວາມກັງວົນກ່ຽວກັບຄວາມລຳອຽງ ແລະ ການຕັດສິນຂອງພະ ຍານ ຫຼື ບັນຫາຕ່າງໆທາງກົດໝາຍ.

**ຄວາມສະເໝີພາບ** ຮຽກຮ້ອງໃຫ້ຜູ້ພິພາກສາປົກປ້ອງຜູ້ດຳເນີນຄະດີ ແລະ ພະຍານທັງໝົດຈາກການຈຳແນກ, ບໍ່ວ່າຈະເປັນການເຂົ້າເຖິງລະບົບຍຸຕິທຳ, ສົ່ງເສີມສິດທິຂອງຕົນເອງ, ການປະກົດຕົວຢູ່ສານ, ເຂົ້າໃຈກົດໝາຍ, ຫຼື ໄດ້ຮັບການຊ່ວຍເຫຼືອ. ຜູ້ພິພາກສາບໍ່ພຽງແຕ່ຕ້ອງຫຼີກລ່ຽງການປະພຶດ ແລະການຕັດສິນຂອງຕົນເອງ, ແຕ່ຍັງຮຽກຮ້ອງການຈຳແນກສົມມຸດຕິຖານແລະການປະພຶດຂອງພະນັກງານສານ, ທະນາຍຄວາມແລະພະຍານ, ການຄຸ້ມຄອງຫ້ອງໄຕ່ສວນເພື່ອເຮັດໃຫ້ກາຍເປັນບ່ອນທີ່ປະຊາຊົນຖືກປະຕິບັດເທົ່າທຽມກັນຢ່າງແທ້ຈິງ.

1 The Bangalore Principles of Judicial Conduct (2002)

ຄວາມອາດສາມາດແລະຄວາມພາກພຽນ ຮຽກຮ້ອງໃຫ້ມີຜູ້ພິພາກ ສາສຶກສາອົບຮົມຕົນເອງ ບໍ່ພຽງແຕ່ກ່ຽວດ້ານກົດຫມາຍ,ແຕ່ຍັງລວມເຖິງຜົນກະທົບຂອງກົດຫມາຍຕໍ່ແມ່ຍິງ ແລະ ຜູ້ດ້ອຍໂອກາດທີ່ອີງໃສ່ສານເພື່ອປົກປ້ອງສິດທິຂອງພວກເຂົາ. ການສຶກສາເປັນທີ່ເປັນປົກກະຕິກ່ຽວກັບຄວາມເປັນຈິງຕໍ່ກັບແມ່ຍິງ ແລະ LGBTI+ ຊ່ວຍໃຫ້ຜູ້ພິພາກສາກຳນົດບັນຫາຄວາມສະເໝີພາບຢູ່ໃນຫ້ອງໄຕ່ສວນ.ການຮຽນຮູ້ຢ່າງຕໍ່ເນື່ອງກ່ຽວກັບລັກສະນະທາງເພດຂອງແຕ່ລະຂົງເຂດຂອງກົດໝາຍ ຫຼື ຂະບວນການ ຊ່ວຍຮັບປະກັນໃຫ້ຜູ້ພິພາກສາຮັບຮູ້ ແລະ ກຽມພ້ອມເພື່ອແກ້ໄຂຄວາມບໍ່ຍຸຕິທຳເຫຼົ່ານີ້. ຄວາມເຂົ້າໃຈກ່ຽວກັບຜົນກະທົບຂອງບົດບາດຍິງຊາຍມີທັງການກວດສອບຫຼັກຖານແລະການຮັບຟັງຜູ້ທີ່ເຄີຍປະສົບກັບການ ຈຳແນກໃນຊີວິດຂອງພວກເຂົາ.

ເພື່ອຕອບສະໜອງຄວາມຄາດຫວັງຂອງການດຳເນີນຄະດີຢ່າງຄົບຖ້ວນ, ຜູ້ພິພາກສາຕ້ອງສືບຕໍ່ສຶກສາອົບຮົມຕົນເອງ, ຮັບປະກັນໃຫ້ມີການປົກປ້ອງລະບຽບການຢ່າງພຽງພໍ ແລະ ກວດກາການປະພຶດຂອງຕົນກ່ຽວກັບບັນຫາທາງເພດ. Nancy Hendry, ຂຽນໃນນາມຂອງເຄືອຂ່າຍຄວາມສັດຊື່ທາງດ້ານຄວາມຍຸຕິທຳໃນທົ່ວໂລກຂອງ UNODC, ກ່າວວ່າ "ໃນຂະນະທີ່ການປະພຶດບາງຢ່າງທີ່ກ່ຽວຂ້ອງກັບບົດບາດຍິງຊາຍອາດຈະຖືກເບິ່ງວ່າເປັນການກະທຳຜິດຫຼືຮ້າຍແຮງກວ່າການປະພຶດອື່ນໆ,ເຊິ່ງບໍ່ມີອັນໃດທີ່ເຫມາະສົມກັບຫຼັກການຂອງຈັນຍາບັນຂອງສານ."[2] ໃນຂະນະທີ່ມາດຕະການທາງສະຖາບັນແມ່ນມີຄວາມຈຳເປັນໃນບາງຄະດີ, ການກະທຳຂອງຜູ້ພິພາກສາສ່ວນບຸກຄົນທີ່ປ່ຽນວັດທະນະທຳແມ່ນມີຄວາມສຳຄັນ.

## ການດຳເນີນການ

ເຄືອຂ່າຍຍຸຕິທຳອາຊຽນ (JIN ອາຊຽນ), ເຄືອຂ່າຍຜູ້ພິພາກສາສະໜັບສະໜູນເຊິ່ງກັນແລະກັນໃນທົ່ວພາກພື້ນ ໄດ້ພັດທະນາການສັງລວມບັນຫາໂດຍຫຍໍ້ເພື່ອສະໜັບສະໜູນຜູ້ພິພາກສາ ແລະ ການດຳເນີນງານ ກ່ຽວກັບຄຳສະເໜີແນະທີ່ໄດ້ປຶກສາຫາລືກັນຢູ່ ກອງປະຊຸມການຈັດ ຕັ້ງປະຕິບັດຖະແຫຼງການ Doha ຂອງອົງການ UNODC.[3] ການສັງລວມບັນຫາໂດຍຫຍໍ້ແມ່ນອີງໃສ່ການຄົ້ນຄວ້າຂະແຫນງການ, ແລະການສຳຫຼວດແລະການສົນທະນາກຸ່ມຂະຫນາດນ້ອຍກັບຜູ້ພິພາກສາໃນພາກພື້ນອາຊຽນ.

ການສະທ້ອນໃຫ້ເຫັນເຖິງຄວາມສຳຄັນຂອງບັນຫາເຫຼົ່ານີ້ແລະຄວາມກັງວົນທີ່ຍົກຂຶ້ນມາໂດຍບັນດາຜູ້ພິພາກສາ, ການສັງລວມບັນຫາໂດຍຫຍໍ້ ມີຈຸດປະສົງເພື່ອເປີດກວ້າງການສົນທະນາກ່ຽວກັບບັນຫາບົດບາດຍິງຊາຍ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຂອງສະຖາບັນ ແລະ ບຸກຄົນ.

ບົດສັງລວມບັນຫາໂດຍຫຍໍ້ຂອງ JIN ອາຊຽນ ໄດ້ຖືກອອກແບບເພື່ອ:

- ສະຫນັບສະຫນູນການປ່ຽນແປງຂອງສະຖາບັນກ່ຽວກັບບັນຫາບົດບາດຍິງຊາຍ
- ສ້າງຄວາມອາດສາມາດຂອງຜູ້ພິພາກສາໃນການກຳນົດ ແລະ ຕອບສະໜອງບັນຫາທີ່ກ່ຽວຂ້ອງກັບບົດບາດຍິງຊາຍ
- ສະໜອງຍຸດທະສາດເພື່ອແກ້ໄຂບັນຫາບົດບາດຍິງຊາຍຢູ່ໃນຫ້ອງໄຕ່ສວນ
- ສົ່ງເສີມສຽງຂອງແມ່ຍິງໃນຕຳແໜ່ງການນຳ
- ສະຫນັບສະຫນູນຜູ້ພິພາກສາທີ່ເຮັດວຽກເພື່ອເຊື່ອມສານບົດບາດຍິງຊາຍເຂົ້າໃນການຝຶກອົບຮົມ, ກົດຈັນຍາບັນແລະການລາຍງານ

ຂໍ້ມູນທາງສະຖິຕິ ແລະ ທ່າອ່ຽງກ່ຽວກັບຄວາມສະເໝີພາບທາງດ້ານບົດບາດຍິງຊາຍ ແລະ ຄວາມຍຸຕິທຳດ້ານຕຸລາການໃນທົ່ວອາຊຽນ, ແລະ ໂດຍສະເພາະໃນບັນດາປະເທດທີ່ເປັນສະມາຊິກຂອງ JIN ອາຊຽນ, ໄດ້ໃຫ້ບໍລິບົດໃນການສົນທະນາທາງຕຸລາການກ່ຽວກັບບັນຫາຕ່າງໆເຫຼົ່ານີ້. ແຕ່ລະບັນຫາໂດຍຫຍໍ້ຈະກວດກາດ້ານໜຶ່ງຂອງບົດບາດຍິງ-ຊາຍ ແລະ ຄວາມຍຸຕິທຳດ້ານຕຸລາການ ແລະ ກຳນົດຜົນກະທົບ ແລະ ພື້ນທີ່ສຳລັບການຈັດຕັ້ງປະຕິບັດ.

ຜູ້ພິພາກສາດຳເນີນການກ່ຽວກັບຄວາມບໍ່ສະເຫມີພາບລະຫວ່າງຍິງຊາຍ, ໂດຍກຳລັງປູກຝັງວັດທະນະທຳທີ່ມີຄວາມເຂັ້ມແຂງ,ໂປ່ງໃສ ໃນການຮັບຮູ້ກ່ຽວກັບບົດບາດຍິງຊາຍລະຫວ່າງເພື່ອນຮ່ວມງານຂອງພວກເຂົາ, ແລະ ກຳລັງສ້າງຄວາມກ້າວຫນ້າກ່ຽວກັບຄວາມເຊື່ອຫມັ້ນຂອງສາທາລະນະຊົນໃນສານ ໃນຖານະທີ່ເປັນບ່ອນປະຕິບັດຢ່າງຍຸຕິທຳ. ການປະຕິບັດຕາມຄວາມເປັນເລີດທາງດ້ານຕຸລາການໂດຍຜ່ານການເຊື່ອມສານການຮຽນຮູ້ຂອງບຸກຄົນ ແລະ ເພື່ອນຮ່ວມງານ ແລະການສະທ້ອນຈາກສະຖາບັນແມ່ນສ່ວນຫນຶ່ງຂອງຄວາມພະຍາຍາມຢ່າງຕໍ່ເນື່ອງຂອງຜູ້ນຳທາງຕຸລາການເພື່ອແກ້ໄຂຄວາມຕ້ອງການຂອງທຸກໆຄົນທີ່ປາກົດຕົວຢູ່ໃນສານຂອງພວກເຂົາ.

2 Hendry, UNODC Page 5. https://www.unodc.org/documents/ji/knowledge_products/Gender_Paper_FINAL_DOHA.pdf

3 Held Feb 24-26, 2020 "High-Level Meeting if the Global Judicial Integrity Network, Doha, Qatar

# ບົດບາດຍິງຊາຍໃນພາກພື້ນອາຊຽນ

ການຮູ້ເຖິງສະຖານະປັດຈຸບັນຂອງບັນຫາບົດບາດຍິງຊາຍຢູ່ໃນພາກພື້ນເປັນພື້ນຖານສໍາລັບການຮັບຮູ້ຄວາມບໍ່ສະເຫມີພາບເຫຼົ່ານີ້ໃນເວລາທີ່ເກີດຂື້ນຢູ່ໃນຫ້ອງໄຕ່ສວນ. ແມ່ຍິງ ແລະ ເດັກຍິງໃນທົ່ວໂລກປະເຊີນກັບອຸປະສັກຕໍ່ການມີສ່ວນຮ່ວມຢ່າງເຕັມທີ່ໃນການໃຊ້ຊີວິດແບບສາທາລະນະ, ອຸປະສັກຕໍ່ການຈ້າງງານ, ການສຶກສາ ແລະການປົກປ້ອງສິດທິ ແລະຮູບແບບທີ່ເປັນໄພຂົ່ມຂູ່ຕໍ່ທາງເລືອກ ແລະ ຄວາມປອດໄພຂອງພວກເຂົາ. ຜົນກະທົບຂອງຄວາມເຊື່ອທາງເພດຕໍ່ຄົນຂ້າມເພດ ແລະຄົນທີ່ມີຄວາມຫຼາກຫຼາຍທາງເພດ ແມ່ນບໍ່ຄ່ອຍຈະມີການວັດແທກ ແລະ ລາຍງານ, ເຖິງແມ່ນວ່າຕົວຢ່າງສ່ວນບຸກຄົນຂອງການຈໍາແນກ ແລະອາຊະຍາກໍາທີ່ເກີດຈາກຄວາມກຽດຊັງຈະເປີດເຜີຍຄວາມຈິງກ່ຽວກັບການຈໍາແນກ ແລະ ເປັນອັນຕະລາຍກໍຕາມ.

ໃນພາກພື້ນອາຊຽນ, ການຕິດຕາມສິດທິແລະຄວາມບໍ່ຍຸດຕິທໍາລະຫວ່າງຍິງຊາຍໄດ້ເປີດເຜີຍໃຫ້ເຫັນເຖິງຄວາມສ່ຽງ ແລະ ສິ່ງກີດຂວາງທີ່ແມ່ຍິງປະເຊີນຢູ່. ໃນປີ 2018, 9% ຂອງແມ່ຍິງ ແລະເດັກຍິງທີ່ມີອາຍຸລະຫວ່າງ 15-49 ປີ ຖືກລາຍງານຄວາມຮຸນແຮງທາງດ້ານຮ່າງກາຍຫຼືທາງເພດໂດຍຄູ່ຊີວິດ ທັງໃນປະຈຸບັນຫຼືໃນອາດີດ ຢູ່ໃນຊ່ວງ 12 ເດືອນທີ່ຜ່ານມາ.[4]

ສິບຫ້າເປີເຊັນຂອງເດັກຍິງໃນອາຊີຕາເວັນອອກສຽງໃຕ້ແມ່ນແຕ່ງງານກ່ອນອາຍຸ 18 ປີ, ໂດຍ 2% ແມ່ນແຕ່ງງານກ່ອນເຂົາເຈົ້າອາຍຸຮອດ 15 ປີ.[5] ການສຶກສາ, ການລົງຄະແນນສຽງ ແລະ ການມີສ່ວນຮ່ວມໃນບ່ອນເຮັດວຽກຂອງແມ່ຍິງແມ່ນມີຄວາມແຕກຕ່າງກັນໃນແຕ່ລະປະເທດ, ແຕ່ໃນທົ່ວພາກພື້ນ, ແມ່ຍິງຍັງປະເຊີນກັບອຸປະສັກຫຼາຍກວ່າຜູ້ຊາຍ.

ເມື່ອເບິ່ງບັນຫາຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍຢູ່ພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ, ເວທີປາໄສດ້ານເສດຖະກິດໂລກໃຫ້ຄວາມເຫັນວ່າ, ຖ້າແນວໂນ້ມການປັບປຸງຍັງຄົງຄືເກົ່າລະຫວ່າງປີ 2016 – 2019, ຈະຕ້ອງໃຊ້ເວລາອີກ 163 ປີເພື່ອປິດຊ່ອງຫວ່າງລະຫວ່າງຍິງ-ຊາຍ.[6] ໃນພາກພື້ນນີ້ມີອັດຕາການປ່ຽນແປງທີ່ຄາດວ່າຈະຍາວທີ່ສຸດໃນລະດັບຂອງກິດຈະກໍາໃນປະຈຸບັນ.

OECD ໄດ້ກວດກາບັນຫາບົດບາດຍິງຊາຍໃນທົ່ວໂລກ, ສ້າງບົດລາຍງານຂອງປະເທດ ແລະ ກໍານົດທ່າອ່ຽງຕໍ່ກັບບັນຫາສັງຄົມ ແລະ ຄວາມສະເໝີພາບລະຫວ່າງຍິງຊາຍ.[7]

**ຕາຕະລາງ 1: ສະຖາບັນທາງສັງຄົມ ແລະ ບົດບາດຍິງຊາຍ**

| ສະຖານທີ່ | ການຈໍາແນກໃນຄອບຄົວ | ການຈໍາກັດທາງຮ່າງກາຍ | ການຈໍາກັດການເຂົ້າເຖິງຊັບພະຍາກອນ ແລະ ຊັບສິນ | ການຈໍາກັດດ້ານສິດເສລີພາບ |
|---|---|---|---|---|
| ອິນໂດເນເຊຍ | 63.1 | 21.9 | 36.5 | 40.4 |
| ສປປ ລາວ | 31.3 | 23.9 | 20.2 | 29.0 |
| ມາເລເຊຍ | 80.8 | .. | .. | .. |
| ຟີລິບປິນ | 67.2 | 25.7 | 67.2 | 45.1 |
| ປະເທດໄທ | 33.4 | 22.7 | 25.2 | 56.8 |
| ຫວຽດນາມ | 23.3 | 30.8 | 32.3 | 13.8 |

ຕົວເລກຂ້າງເທິງນີ້ສະແດງເຖິງເຫດການຈໍາແນກທາງເພດ, ໂດຍຕົວເລກທີ່ສູງກວ່າສະແດງໃຫ້ເຫັນການເກີດຫຼາຍຂຶ້ນ.
ທີ່ມາ: OECD (2021), "Social Institutions and Gender" (indicator)

4 UN WOMEN (2019), REGIONAL FACTSHEET Eastern and South-Eastern Asia and Oceania.

5 UN WOMEN (2019), REGIONAL FACTSHEET Eastern and South-Eastern Asia and Oceania.

6 https://www.weforum.org/agenda/2019/12/gender-gap-report-gender-parity-how-to-speed-up-progress/ As quoted in https://www.lowyinstitute.org/the-interpreter/long-wait-indonesia-female-chief-justice-top-court

7 OECD (2021), "Social Institutions and Gender" (indicator)

## ອິນໂດເນເຊຍ




**56%** ຂອງແມ່ຍິງຢູ່ໃນກໍາລັງແຮງງານເມື່ອທຽບໃສ່ 70.2% ຂອງປະຊາກອນທັງຫມົດທີ່ມີອາຍຸ 15-64 ປີ.

Source: International Labour Organization (via World Bank), 2021




**26.1%** ຂອງແມ່ຍິງລະຫວ່າງ 15-64 ປະສົບຄວາມຮຸນແຮງໂດຍຄູ່ທີ່ໃກ້ຊິດຂອງເຂົາເຈົ້າ

Source: Government of Indonesia (translated), 2021



**1** ໃນ **9** ຜູ້ພິພາກສາໃນສານລັດຖະທໍາມະນູນແມ່ນແມ່ຍິງ (2021)




**25%** ຂອງຜູ້ພິພາກສາໃນສານສາສະຫນາແມ່ນແມ່ຍິງ (655 ໃນ 2655);

**18%** ຂອງຫົວໜ້າຜູ້ພິພາກສາໃນສານສາສະຫນາຂັ້ນຕົ້ນແມ່ນແມ່ຍິງ (73 ໃນ 412);

**25%** ຂອງຜູ້ພິພາກສາໃນສານສາສະຫນາແມ່ນແມ່ຍິງ (655 ໃນ 2655)

Source: Australia Indonesia Partnership for Justice 2, 2021

## ສປປ ລາວ




**80.5%** ຂອງແມ່ຍິງເປັນກໍາລັງແຮງງານເມື່ອທຽບໃສ່ 81.4% ຂອງປະຊາກອນທັງຫມົດອາຍຸ 15-64 ປີ.

Source: International Labour Organization (via World Bank), 2021




ອັດຕາການຮູ້ໜັງສືຂອງແມ່ຍິງແມ່ນ **79%** ທຽບໃສ່ **85%** ຂອງປະຊາກອນຜູ້ໃຫຍ່ທັງໝົດ

Source: UNESCO (via World Bank), 2021




**64.2%** ຂອງເດັກຍິງຮຽນຈົບມັດທະຍົມຕອນຕົ້ນ, ທຽບໃສ່ເດັກຊາຍ 63.7%.

Source: UNESCO UIS, 2021




ແມ່ຍິງມີ **22%** of ຂອງບ່ອນນັ່ງໃນສະພາ

Source: Inter-Parliamentary Union (via World Bank), 2021

## ມາເລເຊຍ




**55%** ຂອງແມ່ຍິງຢູ່ໃນກໍາລັງແຮງງານເມື່ອທຽບໃສ່ 68.6% ຂອງປະຊາກອນທັງຫມົດທີ່ມີອາຍຸ 15-64 ປີ.

Source: International Labour Organization (via World Bank), 2021



ດັດຊະນີຄວາມສະເໝີພາບທາງບົດບາດຍິງຊາຍຂອງເດັກຍິງທີ່ຮຽນຈົບມັດທະຍົມຕອນຕົ້ນແມ່ນ **0.96** (ຕໍ່າກວ່າ 1.00 ໝາຍຄວາມວ່າເດັກຍິງມີອັດຕາການຮຽນຈົບຕໍ່າກວ່າເດັກຊາຍ)

Source: UNESCO, 2021




**12%** ຂອງປະຊາຊົນມີປະສົບກັບການ ຖືກຂົ່ມຂູ່ທາງເພດ ຫຼື ມີຄົນທີ່ຮູ້ຈັກ

Source: Transparency International, 2021




**15%** ຂອງທີ່ນັ່ງໃນສະພາແຫ່ງຊາດແມ່ນແມ່ຍິງ

Source: Inter-Parliamentary Union (via World Bank), 2021



**22.4%** ຂອງຕໍາແຫນ່ງໃນສະພາສູງ, **10.8%** ຂອງສະພາສູງ, ລັດຖະມົນຕີ **8.6%** ແລະ ຮອງລັດຖະມົນຕີ **17.6%** ເປັນເພດຍິງ

Source: Department of Statistics, Malaysia, 2021

## ຟິລິບປິນ




**49%** ຂອງແມ່ຍິງຢູ່ໃນກໍາລັງແຮງງານເມື່ອທຽບໃສ່ 62,3% ຂອງປະຊາກອນທັງຫມົດທີ່ມີອາຍຸ 15-64 ປີ.

Source: International Labour Organization (via World Bank), 2021




**9%** ຂອງປະຊາຊົນມີປະສົບການ ຖືກຂົ່ມຂູ່ທາງເພດ ຫຼື ມີຄົນທີ່ຮູ້ຈັກ

Source: Transparency International, 2021




**20.1%** ຂອງແມ່ຍິງລາຍງານວ່າປະສົບກັບຄວາມຮຸນແຮງຈາກຄູ່ຂອງເຂົາເຈົ້າ

Source: UN Women, 2021




ແມ່ຍິງມີ **28.7%** ຂອງບ່ອນນັ່ງໃນສະພາ

Source: Philippine Statistics Authority, 2021




**63%** ຂອງຜູ້ພິພາກສາແມ່ນແມ່ຍິງ

Source: Supreme Court of the Philippines, 2021

## ປະເທດໄທ




ມີພຽງແຕ່ **58.5%** ຂອງແມ່ຍິງ, ເມື່ອທຽບກັບ 74.6% ຂອງຜູ້ຊາຍ, ຢູ່ໃນກຳລັງແຮງງານ.

Source: ILOSTAT, 2020




**15.75%** ຂອງບ່ອນນັ່ງໃນສະພາແຫ່ງຊາດແມ່ນແມ່ຍິງ

Source: Inter-Parliamentary Union (via World Bank), 2021




**15%** ຂອງປະຊາຊົນປະສົບກັບການຖືກຂົ່ມຂູ່ທາງເພດ ຫຼື ມີຄົນທີ່ຮູ້ຈັກ

Source: Transparency International, 2020



ຫຼາຍກວ່າ **30,000** ກໍລະນີຂອງຄວາມຮຸນແຮງຕໍ່ແມ່ຍິງໄດ້ຖືກລາຍງານຕໍ່ສູນວິກິດການ One Stop (OSCC) ທີ່ດຳເນີນໂດຍກະຊວງສາທາລະນະສຸກ, ແຕ່ວ່າພຽງແຕ່ **5,000** ກໍລະນີທີ່ຖືກບັນທຶກໂດຍຕຳຫຼວດ, ແລະມີພຽງແຕ່ **1,500** ກໍລະນີເທົ່ານັ້ນທີ່ຖືກຈັບ.

Source: Skinnider, E., Montgomery, r., & Garrett, S. The Trial of Rape. Bangkok, Thailand: UN Women, UNDP, UNODC. Referenced at https://asiapacific.unwomen.org/en/countries/thailand/ending-violence-against-women, 2017

## ຫວຽດນາມ




**62.6%** ຂອງແມ່ຍິງ, ເມື່ອທຽບກັບ 74.8% ຂອງຜູ້ຊາຍ, ແມ່ນຢູ່ໃນກຳລັງແຮງງານ

Source: General Statistics Office of Viet Nam (translated), 2022




**3%** ຂອງປະຊາຊົນປະສົບກັບການຖືກຂົ່ມຂູ່ທາງເພດ ຫຼື ມີຄົນທີ່ຮູ້ຈັກ

Source: Transparency International, 2021




ແມ່ຍິງໄດ້ຮັບຄ່າຈ້າງ **75%** ຂອງຄ່າຈ້າງທີ່ຜູ້ຊາຍໄດ້ຮັບສຳລັບວຽກເຮັດງານທຳດຽວກັນ

Source: ILO Wages and Equitable Growth in Viet Nam, referenced at https://asiapacific.unwomen.org/en/countries/vietnam, 2021




**35.2%** ແມ່ຍິງປະສົບກັບຄວາມຮຸນແຮງທາງດ້ານຮ່າງກາຍ ແລະ **10.8%** ຂອງແມ່ຍິງປະສົບກັບຄວາມຮຸນແຮງທາງເພດ

Source: UN Women, 2021




**38.3%** ຂອງບ່ອນນັ່ງໃນສະພາແມ່ນແມ່ຍິງ

Source: Inter-Parliamentary Union (via World Bank), 2022




ໃນຂົງເຂດຕຸລາການ, ຜູ້ພິພາກສາ SPC **29%** ເປັນແມ່ຍິງ ແລະ **33%** ຂອງຜູ້ພິພາກສາສານຂັ້ນແຂວງ ແລະ ເມືອງເປັນແມ່ຍິງ.

Source: UNODC, 2013

# ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ກັບລະບົບກົດໝາຍ

ຄວາມເປັນເລີດທາງດ້ານຕຸລາການແມ່ນຕິດພັນກັບຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ກັບລະບົບກົດໝາຍ. ໂດຍບໍ່ມີຄວາມເຊື່ອໝັ້ນຂອງສາທາລະນະຊົນໃນລະບົບ, ປະຊາຊົນບໍ່ໄວ້ວາງໃຈຜູ້ພິພາກສາເພື່ອຕັດສິນຄວາມຂັດແຍ້ງທາງດ້ານກົດໝາຍຂອງພວກເຂົາ. ການສໍ້ລາດບັງຫຼວງ ແລະ ຄວາມລໍາອຽງ, ແລະ ຄວາມຮັບຮູ້ກ່ຽວກັບອັກຄະຕິ, ທໍາລາຍຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນຕໍ່ກັບອົງການຕຸລາການ.

ເມື່ອບໍ່ດົນມານີ້ Transparency International ໄດ້ເຜີຍແຜ່ຕົວຊີ້ວັດການສໍ້ລາດບັງຫຼວງທົ່ວໂລກ: Asia 2020.[8] ເຊິ່ງໄດ້ສໍາຫຼວດປະຊາຊົນກ່ຽວກັບຄວາມຮັບຮູ້ຂອງເຂົາເຈົ້າກ່ຽວກັບສະຖາບັນຕ່າງໆ ແລະ ຄວາມເຊື່ອໝັ້ນໂດຍລວມຂອງເຂົາເຈົ້າຕໍ່ກັບການໃຫ້ບໍລິການດ້ານສາທາລະນະຊົນ.

**ຮູບທີ 1: ການໃຫ້ສິນບົນແຍກຕາມປະເທດ**




Source: Transparency International. Global Corruption Barometer: Asia 2020. page 21.

8 https://www.transparency.org/en/gcb/asia/asia-2020

## ຮູບທີ 2: ຄວາມເຊື່ອໝັ້ນຕໍ່ກັບສານ ແລະ ຕໍາຫຼວດ




Source: Transparency International. Global Corruption Barometer: Asia 2020. page 17.

## ຮູບທີ 3: ອັດຕາການໃຫ້ສິນບົນແຍກຕາມການບໍລິການ




Source: Transparency International. Global Corruption Barometer: Asia 2020. page 22.

## ຮູບທີ 4: ການສໍ້ລາດບັງຫຼວງແຍກຕາມສະຖາບັນ




Source: Transparency International. Global Corruption Barometer: Asia 2020. page 14.

## Figure 5: Use of personal connections by service




Source: Transparency International. Global Corruption Barometer: Asia 2020. page 24.

ການສໍ້ລາດບັງຫຼວງສິ່ງຜົນກະທົບຕໍ່ປະຊາຊົນຕ່າງກັນໂດຍອີງໃສ່ເພດຂອງພວກເຂົາ. ໜ່ວຍອັດແທກການສໍ້ລາດບັງຫຼວງໂລກພົບວ່າມີຂໍ້ມູນທາງດ້ານບົດບາດຍິງຊາຍຕໍ່ກັບການໃຫ້ສິນບົນແລະການສໍ້ລາດບັງຫຼວງ. ແມ່ຍິງມີຄວາມສ່ຽງຕໍ່ການຈ່າຍຄ່າສິນບົນເພື່ອຮັບເອົາການບໍລິການ ແລະ ເອກະສານລະບຸຕົວຕົນເຊັ່ນ: ໜັງສືຜ່ານແດນ ຫຼື ໃບຂັບຂີ່. ໃນທາງກົງກັນຂ້າມ, ຜູ້ຊາຍມີແນວໂນ້ມທີ່ຈະຈ່າຍຄ່າສິນບົນສໍາລັບການບໍລິການດ້ານສຸຂະພາບແລະສິ່ງອໍານວຍຄວາມສະດວກ.ເມື່ອເບິ່ງພຽງແຕ່ການໃຫ້ສິນບົນຂອງຕໍາ ຫຼວດ, ຜູ້ຊາຍມີແນວໂນ້ມທີ່ຈະຈ່າຍສິນບົນໃຫ້ຕໍາຫຼວດ 2.5 ເທົ່າ.[9]

ສະຖິຕິເຫຼົ່ານີ້ ສະແດງໃຫ້ເຫັນເຖິງວ່າຄວາມເຊື່ອດ້ານບົດບາດຍິງຊາຍມີຜົນຕໍ່ປະຊາຊົນແຕກຕ່າງກັນຄືແນວໃດ. ແມ່ຍິງຖືກຮ້ອງຂໍ ຫຼື ຄາດວ່າຈະຈ່າຍສິນບົນສໍາຫລັບເອກະສານທີ່ຜູ້ຊາຍມັກຈະຖືຄອງເລື້ອຍໆບໍ່? ຕາມຄວາມເຊື່ອແລ້ວ ຄາດວ່າຜູ້ຊາຍຈະຈ່າຍຄ່າສິນບົນສໍາລັບໃຫ້ກັບຕໍາຫຼວດບໍ່? ຖ້າເປັນດັ່ງນັ້ນ, ແມ່ຍິງຈະຖືກປະຕິບັດແນວໃດເມື່ອລາຍງານອາດຊະຍາກໍາກັບຕໍາຫຼວດ ຫຼື ຊອກຫາການບໍລິການດ້ານສຸຂະພາບ ຫຼື ການບໍລິການທີ່ຕ້ອງລະບຸຕົວຕົນສໍາລັບຄອບຄົວຂອງພວກເຂົາ

ໜ່ວຍອັດແທກການສໍ້ລາດບັງຫຼວງໂລກ ອາດຈະສະທ້ອນເຖິງສົມມຸດຖານທາງເພດກ່ຽວກັບຄວາມສາມາດຂອງຜູ້ຊາຍແລະແມ່ຍິງແລະຄວາມຮັບຜິດຊອບສໍາລັບຂົງເຂດທີ່ແຕກຕ່າງກັນຂອງການໃຊ້ຊີວິດແບບສາທາລະນະ ແລະ ຢູ່ໃນຄອບຄົວ. ບົດລາຍງານໄດ້ຊີ້ໃຫ້ເຫັນເຖິງຄວາມຕ້ອງການທີ່ຈະເຂົ້າໃຈໃຫ້ດີຂຶ້ນກ່ຽວກັບບົດບາດຍິງຊາຍ ແລະ ການສໍ້ລາດບັງຫຼວງທີ່ຂັດຂວາງແມ່ຍິງຈາກການລາຍງານກ່ຽວກັບອາດຊະຍາກໍາ, ໂດຍສະເພາະແມ່ນອາດຊະຍາກໍາທີ່ຜູ້ຊາຍເປັນຜູ້ກະທໍາ. ນອກນີ້ ຍັງມີການຕັ້ງຄໍາຖາມກ່ຽວກັບການສໍ້ລາດບັງຫຼວງທີ່ເຮັດໃຫ້ແມ່ຍິງຂຶ້ນກັບສະມາຊິກຄອບຄົວທີ່ເປັນຜູ້ຊາຍ. ການຕັ້ງສົມມຸດຕິຖານເຫຼົ່ານີ້ແມ່ນອຸປະສັກເພີ່ມເຕີມສໍາລັບພໍ່ແມ່ທີ່ຍັງໂສດ ແລະ ຜູ້ທີ່ດໍາລົງຊີວິດທີ່ບໍ່ສອດຄ່ອງກັບລັກສະນະທາງເພດແບບທົ່ວໄປ.

9 Transparency.org Global Corruption Barometer: Asia 2020 page 21, https://www.transparency.org/en/gcb/asia/asia-2020

ສັງລວມບັນຫາໂດຍຫຍໍ້ 1

# ບົດບາດຍິງຊາຍ ແລະ ການເຂົ້າເຖິງຄວາມຍຸຕິທຳ

## ຄຳນິຍາມ:

**ການເຂົ້າເຖິງຄວາມຍຸຕິທຳ**ແມ່ນຫຼັກການພື້ນຖານຂອງກົດໝາຍ. ໃນກໍລະນີທີ່ບໍ່ມີການເຂົ້າເຖິງຄວາມຍຸຕິທຳ, ປະຊາຊົນບໍ່ສາມາດທີ່ຈະສື່ສານສຽງຂອງພວກເຂົາໄດ້, ການໃຊ້ສິດທິຂອງພວກເຂົາ, ຄວາມທ້າທາຍຕໍ່ການຈຳແນກ, ຫຼື ເຮັດໃຫ້ຜູ້ຕັດສິນໃຈມີຄວາມໂປ່ງໃສ. ຖະແຫຼງການຂອງກອງປະຊຸມຂັ້ນສູງກ່ຽວກັບລະບຽບກົດໝາຍໄດ້ເນັ້ນໜັກເຖິງສິດສະເໝີພາບໃນການເຂົ້າເຖິງຄວາມຍຸຕິທຳຂອງທຸກຄົນ, ໃນນັ້ນມີບັນດາສະມາຊິກກຸ່ມດ້ອຍໂອກາດ, ແລະ ໄດ້ຢືນຢັນຄືນໃນການໃຫ້ຄຳໝັ້ນສັນຍາຂອງປະເທດພາຄີໃນການປະຕິບັດທຸກບາດກ້າວທີ່ຈຳເປັນເພື່ອໃຫ້ມີຄວາມຍຸຕິທຳ, ໂປ່ງໃສ, ມີປະສິດທິຜົນ. ການບໍລິການທີ່ບໍ່ມີການຈຳແນກ ແລະສາມາດກວດສອບໄດ້ໂດຍການສົ່ງເສີມການເຂົ້າເຖິງຄວາມຍຸຕິທຳສຳລັບທຸກຄົນ.

Source: United Nations

## ຄຳຄິດເຫັນ: ຜົນສະທ້ອນຕໍ່ຄວາມເປັນເລີດທາງດ້ານຕຸລາການ

ການເຂົ້າເຖິງຄວາມຍຸຕິທຳຂອງແມ່ຍິງແມ່ນໄດ້ຮັບຜົນກະທົບຈາກການຈຳແນກບົດບາດຍິງ-ຊາຍ ເຊັ່ນ ການເຂົ້າເຖິງການບໍລິການ, ຄວາມປອດໄພ, ຄວາມໝັ້ນຄົງທາງດ້ານເສດຖະກິດ ແລະ ການສຶກສາຂອງແມ່ຍິງ. ສົມມຸດຖານທາງເພດທີ່ສົ່ງເສີມທັດສະນະທີ່ລ້າສະໄຫມແລະຈຳກັດທັດສະນະກ່ຽວກັບຄວາມສາມາດແລະຄວາມຕ້ອງການຂອງແມ່ຍິງ. ການຈຳແນກທາງເພດໃນການຕັດສິນໃຈ ແມ່ນຍັງຄົງຄວບຄຸມຊີວິດຂອງແມ່ຍິງ ແລະ ຮັກສາອຳນາດ ແລະ ສິດທິພິເສດໃນສັ່ງຄົມ. ກຳລັງຕ່າງໆເຫຼົ່ານີ້ຢູ່ໃນສັງຄົມຍັງສົ່ງຜົນກະທົບຕໍ່ການເຂົ້າເຖິງຄວາມຍຸດຕິທຳຂອງແມ່ ຍິງ. ສິ່ງກີດຂວາງເຫຼົ່ານີ້ແມ່ນຮ້າຍແຮງຂຶ້ນສຳລັບຄົນຂ້າມເພດທີ່ປະເຊີນກັບລະດັບການຈຳແນກເພີ່ມເຕີມ ແລະ ຄວາມບໍ່ອົດທົນອົດກັ້ນ. ຄົນຂ້າມເພດບໍ່ອາດລາຍງານອາດຊະຍາກຳ ຫຼື ເລີ່ມດຳເນີນຄະດີໃນສານໄດ້ເພາະຢ້ານກົວຕໍ່ຄວາມປອດໄພ ແລະ ຄວາມເປັນສ່ວນຕົວ.

ໃນຂະນະທີ່ສິດທິທາງດ້ານກົດໝາຍ ອາດປະກົດຄວາມເປັນກາງລະຫວ່າງຍິງຊາຍ, ຄວາມເປັນຈິງຂອງການເຂົ້າເຖິງຄວາມຍຸຕິທຳຮຽກຮ້ອງໃຫ້ມີການກວດສອບຄວາມເປັນຈິງຂອງຊີວິດຂອງແມ່ຍິງ. ເພື່ອເຂົ້າເຖິງຄວາມຍຸຕິທຳຢ່າງສົມ ບູນ, ແມ່ຍິງຕ້ອງການຄວາມເປັນເອກະລາດທາງດ້ານກົດຫມາຍແລະເສດຖະກິດຈາກຄອບຄົວຂອງເຂົາເຈົ້າ, ການຄວບຄຸມການຈ້າງງານ, ການສະຫນັບສະຫນູນດ້ານສຸຂະພາບແລະການດູແລເດັກແລະລະດັບຄວາມຮູ້ແລະການສຶກສາເພື່ອເຂົ້າໃຈແລະປະຕິບັດສິດທິຂອງເຂົາເຈົ້າໄດ້. ຄວາມເຊື່ອກ່ຽວກັບບົດບາດຍິງຊາຍໃນສັງຄົມມີຜົນທາງລົບຕໍ່ບົດບາດຂອງແມ່ຍິງໃນຄອບຄົວ ແລະ ສັງຄົມ. ແມ່ຍິງອາດຈະມີຄວາມຮູ້ສຶກຄວາມກົດດັນທີ່ຈະຫາຂໍ້ອ້າງຫຼືປ້ອງກັນຕົນເອງຈາກຜົວທີ່ຂົ່ມເຫັງພວກເຂົາ. ແນວຄວາມຄິດທີ່ລ້າສະໄຫມກ່ຽວກັບຄວາມຮຸນແຮງແລະການຂົ່ມຂືນໃນການແຕ່ງງານ ອາດຈະຂັດຂວາງແມ່ຍິງຈາກການລາຍງານອາດຊະຍາກຳທີ່ຮ້າຍແຮງເຫຼົ່ານີ້. ແມ່ຍິງປະເຊີນກັບລັກສະນະເຫຼົ່ານີ້ທຸກຄັ້ງທີ່ເຂົາເຈົ້າເລີ່ມຂຶ້ນສານ, ການປະກົດຕົວເປັນພະຍານ ຫຼື ຂໍການປົກປ້ອງຈາກຕຳຫຼວດ ຫຼື ສານ. ການເຂົ້າເຖິງຄວາມຍຸຕິທຳຢ່າງເຕັມສ່ວນຈະເກີດຂຶ້ນເມື່ອແມ່ຍິງມີຄວາມສະ ເໝີພາບຢ່າງເຕັມທີ່ໃນສັງຄົມ. ມາຮອດປັດຈຸບັນ, ສານແລະຕຸລາການແມ່ນເສົາຄ້ຳສຳຄັນໃນການປົກປ້ອງສິດທິຂອງແມ່ຍິງ.

ການຮັບປະກັນການເຂົ້າເຖິງຄວາມຍຸຕິທຳ, ໃນຖານະຜູ້ພິພາກສາ, ຈະຫມາຍເຖິງການຕັ້ງຄຳຖາມກ່ຽວກັບວິທີການທີ່ຄະດີມາຮອດສານ, ຄຳຖາມກ່ຽວກັບຂໍ້ຕົກລົງລະຫວ່າງທະນາຍຄວາມ, ການອ້າງອີງເຖິງການສະຫນັບສະຫນູນທາງດ້ານກົດຫມາຍແລະສັງຄົມ, ແລະໃຫ້ພະຍານໄດ້ເວົ້າໂດຍກົງເພື່ອອະທິບາຍຄວາມຕ້ອງການແລະຄວາມກົດດັນ ແລະຄວາມຮູ້ສຶກຂອງພວກເຂົາ. ຜູ້ພິພາກສາທີ່ເຂົ້າໃຈວ່າທຸກສິ່ງທຸກຢ່າງໄດ້ຖືກປະຕິບັດຢ່າງຍຸຕິທຳເຖິງປະຕູຫ້ອງໄຕ່ສວນແມ່ນການລະເລີຍຫນ້າທີ່ຂອງພວກເຂົາເພື່ອຮັບປະກັນການເຂົ້າເຖິງສານເທົ່າທຽມກັນ. ການເຂົ້າເຖິງຄວາມຍຸຕິທຳມັກຈະຮຽກຮ້ອງໃຫ້ມີການປັບຂະບວນການສານ, ຊັບພະຍາກອນຫຼືກຳນົດເວລາເພື່ອແກ້ໄຂຄວາມບໍ່ສະເຫມີພາບຂອງສັງຄົມ. ຜູ້ພິພາກສາ, ໃນການຄວບຄຸມຫ້ອງໄຕ່ສວນ, ສາມາດຖາມຄຳຖາມເຫຼົ່ານີ້ແລະຮຽກຮ້ອງໃຫ້ດັດແປງຂະບວນການແລະກຳນົດເວລາເພື່ອຮັບປະກັນວ່າທຸກຄົນສາມາດເຂົ້າເຖິງຄວາມຍຸດຕິທຳເທົ່າທຽມກັນ.

## ມັນສະແດງອອກຄືແນວໃດ?

ແມ່ຍິງທີ່ບໍ່ມີສິດເທົ່າທຽມກັນໃນການເຂົ້າເຖິງ ການເງິນຂອງຄອບຄົວ, ການສຶກສາ ຫຼືການລ້ຽງດູ ລູກ ອາດຈະບໍ່ສາມາດເລີ່ມດໍາເນີນຄະດີໃນສານ, ໄປ ສານ ຫຼື ຈ່າຍຄ່າທະນາຍຄວາມໄດ້.

ແມ່ຍິງທີ່ຢູ່ໃນສາຍສໍາພັນທີ່ຖືກຂົ່ມເຫັງຫຼືຄອບຄຸມ ອາດຈະຢ້ານທີ່ຈະໂທຫາຕໍາຫຼວດ.

ແມ່ຍິງທີ່ມີລູກອາດຈະຢ້ານວ່າເຂົາເຈົ້າຈະສູນເສຍ ການເບິ່ງແຍງລູກຂອງເຂົາເຈົ້າ ຖ້າພວກເຂົາລຸກຂຶ້ນ ຕໍ່ສູ້ກັບຄູ່ທີ່ຂົ່ມເຫັງພວກເຂົາ.

ແມ່ຍິງທີ່ຖືກປະຕິບັດຢ່າງບໍ່ຍຸຕິທໍາຈາກເຈົ້າໜ້າທີ່ຫຼື ຕໍາຫຼວດອາດຈະບໍ່ໄວ້ວາງໃຈລະບົບຍຸຕິທໍາ.

ແມ່ຍິງອາດຈະປະເຊີນກັບອຸປະສັກຕໍ່ ການລົງທະບຽນທຸລະກິດຫຼືຄວາມເປັນເອກະລາດໃນ ການພົວພັນກັບທະນາຄານ.

ຄວາມປອດໄພທາງດ້ານການເງິນຂອງແມ່ຍິງ ຫຼື ສິດທິການຈ້າງງານອາດຈະບໍ່ຖືກປະຕິບັດຢ່າງ ຈິງຈັງເທົ່າກັບຜູ້ຊາຍ.

ໃນບາງສະພາບການ, ຫຼືບາງກໍລະນີທາງກົດໝາຍ, ຄວາມສ່ຽງ ຕໍ່ແມ່ຍິງແມ່ນສູງກວ່າຫຼາຍ. ກໍລະນີຄວາມຮຸນແຮງຕໍ່ແມ່ຍິງທີ່ ຍື່ນຂໍຢ່າຮ້າງ ຫຼື ລາຍງານການຂູດຮີດທາງເພດ ເປັນສິ່ງ ກີດຂວາງແມ່ຍິງຜູ້ອື່ນທີ່ອາໄສຢູ່ໃນສະຖານະການທີ່ຮຸນແຮງ. ແມ່ຍິງທີ່ສູນເສຍການລ້ຽງດູລູກຂອງເຂົາເຈົ້າຍ້ອນວ່າເຂົາເຈົ້າ ຢືນຂຶ້ນເພື່ອສິດທິຂອງເຂົາເຈົ້າກາຍເປັນຄໍາເຕືອນແມ່ຍິງອື່ນ ໆ. ການປະພຶດຂອງຜູ້ພິພາກສາສາມາດເຮັດຊ້ໍາແບບບໍ່ຕັ້ງໃຈ ຫຼື ຍອມແພ້ຕໍ່ຜົນສະທ້ອນເຫຼົ່ານີ້.

ໃນທາງກົງກັນຂ້າມ, ຜູ້ພິພາກສາສາມາດຢຸດຕິວົງຈອນຂອງ misogyny ແລະອັນຕະລາຍເຫຼົ່ານີ້. ອົງການຕຸລາການບໍ່ ພຽງແຕ່ຫຼີກເວັ້ນການສົ່ງຂໍ້ຄວາມທີ່ຈໍາແນກແລະເປັນ ອັນຕະລາຍເຫຼົ່ານີ້, ແຕ່ຍັງບອກຢ່າງຈະແຈ້ງກ່ຽວກັບຄໍາໝັ້ນ ສັນຍາຂອງພວກເຂົາຕໍ່ຄວາມສະເໝີພາບແລະຄວາມສົນໃຈ ຂອງເຂົາເຈົ້າຕໍ່ກັບພຶດຕິກໍາການຂົ່ມຂູ່ຂອງຄອບຄົວ, ນາຍຈ້າງ, ຫຼືຜູ້ນໍາທີ່ຊອກຫາທີ່ຈະເຮັດໃຫ້ແມ່ຍິງເຂົ້າໄປໃນ ຄວາມງຽບສະຫງົບ.

ຂັ້ນຕອນທີ່ສໍາຄັນໄດ້ຖືກປະຕິບັດໃນປະເທດ ອິນໂດເນເຊຍເພື່ອເພີ່ມການເຂົ້າເຖິງຂອງແມ່ຍິງໃນ ສານສາດສະໜາທີ່ຈັດການກັບບັນຫາກົດໝາຍ ຄອບຄົວສ່ວນໃຫຍ່. ໃນໄລຍະທົດສະວັດທີ່ຜ່ານມາ, ຄຽງ ຄູ່ກັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ PEKKA, ລັດຖະບານໄດ້ນໍາສະເໜີການບໍລິການໃຫ້ຄໍາປຶກສາ ທາງດ້ານກົດໝາຍຟຣີແລະສານມືຖືແລະຍົກເວັ້ນ ຄ່າທໍານຽມສານ.

ໃນລະຫວ່າງປີ 2008 ຫາ 2018, ມີກໍລະນີສານ ເພີ່ມຂຶ້ນ 18 ເທົ່າທີ່ຜູ້ພິພາກສາທີ່ເດີນທາງໄປສານມື ຖື. ໃນຈໍານວນປະມານ 500,000 ຄົນທີ່ໄດ້ຍື່ນຄະດີຕໍ່ ສານຄອບຄົວໃນປີ 2016, 57% ໄດ້ຖືກຍົກເວັ້ນຄ່າ ທໍານຽມ, ມີການເຂົ້າເຖິງສານວົງຈອນ ຫຼືໄດ້ຮັບ ຄໍາແນະນໍາທາງກົດໝາຍ.

Source: [UN WOMEN 2019 REGIONAL FACTSHEET Eastern and South-Eastern Asia and Oceania]

## ການປະຕິບັດສໍາລັບຕຸລາການ

- ✓ ຈັດການຝຶກອົບຮົມເປັນປົກກະຕິສໍາລັບຜູ້ພິພາກສາ ໃຫມ່ກ່ຽວກັບຜົນກະທົບຂອງການຈໍາແນກບົດບາດ ຍິງຊາຍໃນການເຂົ້າເຖິງຄວາມຍຸດຕິທໍາ.
- ✓ ສ້າງຄະນະປະຈໍາກ່ຽວກັບຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ເພື່ອຕິດຕາມ ແລະ ລາຍງານ ບັນຫາຍິງ-ຊາຍ ແລະ ແກ້ໄຂສິ່ງທ້າທາຍທີ່ເກີດຂຶ້ນ.

## ການປະຕິບັດສໍາລັບຜູ້ພິພາກສາ

- ✓ ຕິດຕາມຜົນກະທົບດ້ານບົດບາດຍິງຊາຍຕໍ່ການເຂົ້າ ເຖິງຄວາມຍຸຕິທໍາ.
- ✓ ແບ່ງປັນບົດລາຍງານກັບເພື່ອນຮ່ວມງານ ເຊິ່ງເປັນ ສ່ວນໜຶ່ງຂອງການຮຽນຮູ້ຈາກເພື່ອຮ່ວມງານ.
- ✓ ໃຫ້ການຊ່ວຍເຫຼືອໃນເວລາທີ່ແມ່ຍິງຖືກປະຕິເສດ ການເຂົ້າເຖິງຄວາມຍຸຕິທໍາຢູ່ໃນຫ້ອງໄຕ່ສວນຂອງ ທ່ານ.

## ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ

📖 [ຄວາມສະເໝີພາບທາງເພດ ແລະຍຸຕິທໍາ: ການເຂົ້າ ເຖິງທີ່ເທົ່າທຽມກັນຄວາມຍຸດຕິທໍາສໍາລັບແມ່ຍິງ]

ສ້າງລວມບັນຫາໂດຍຫຍໍ້ 2

# ຄວາມເຊື່ອກ່ຽວກັບບົດບາດຍິງຊາຍ ແລະການຈຳແນກຢູ່ໃນຫ້ອງໄຕ່ສວນ

## ຄຳນິຍາມ:

ຄວາມເຊື່ອກ່ຽວກັບບົດບາດຍິງຊາຍ ແມ່ນທັດສະນະທົ່ວໄປ ຫຼື ຄວາມນຶກຄິດກ່ອນໜ້າກ່ຽວກັບຄຸນລັກສະນະ ຫຼື ລັກສະນະ, ຫຼື ບົດບາດທີ່ຄວນມີ ຫຼືປະຕິບັດໂດຍແມ່ຍິງ ແລະ ຜູ້ຊາຍ. ຄວາມເຊື່ອແບບຜິດໆກ່ຽວກັບບົດບາດຍງຊາຍເປັນອັນຕະລາຍໃນເວລາທີ່ມັນຈຳກັດຄວາມສາມາດຂອງແມ່ຍິງ ແລະ ຜູ້ຊາຍໃນການພັດທະນາຄວາມສາມາດສ່ວນຕົວຂອງເຂົາເຈົ້າ, ດຳເນີນອາຊີບຂອງເຂົາເຈົ້າ ແລະ/ຫຼືເລືອກຊີວິດຂອງເຂົາເຈົ້າ.

ບໍ່ວ່າຈະເປັນສັດຕູທີ່ໂຫດຮ້າຍ (ເຊັ່ນ: “ຜູ້ຍິງບໍ່ມີເຫດຜົນ”) ຫຼືເບິ່ງຄືວ່າອ່ອນໂຍນ (“ຜູ້ຍິງທີ່ມີຄວາມອ່ອນນຸ່ມ”), ຫຼື ຄວາມເຊື່ອທີ່ເປັນອັນຕະລາຍເຮັດໃຫ້ເກີດຄວາມບໍ່ສະເໝີພາບກັນຫຼາຍຂຶ້ນ.

Source: Gender Stereotyping, UNHCR

## ຄວາມຄິດເຫັນ: ຜົນສະທ້ອນຕໍ່ຄວາມເປັນເລີດທາງດ້ານຕຸລາການ

ຄວາມເຊື່ອກ່ຽວກັບບົດບາດຍິງຊາຍເປັນສ້າງການສົມມຸດຖານໂດຍຕົນເອງກ່ຽວກັບວິທີທີ່ແມ່ຍິງ ແລະ ຜູ້ຊາຍຄວນປະພຶດ ຫຼື ປະຕິກິລິຍາ ແລະສິ່ງທີ່ເຂົາເຈົ້າຄວນເຮັດໃນສັງຄົມ. ຮູບແບບເພດແມ່ນມັກຈະອີງໃສ່ຄວາມເຂົ້າໃຈສອງຢ່າງທີ່ມີພຽງແຕ່ສອງວິທີຂອງຄວາມເປັນຜູ້ຍິງ ແລະ ຄວາມເປັນຜູ້ຊາຍເທົ່ານັ້ນ, ແລະມີພຽງແຕ່ຢ່າງນີ້ເທົ່ານັ້ນທີ່ຖືກຕ້ອງຕໍ່ການປະພຶດ. ຄວາມເຊື່ອດັ່ງກ່າວສະທ້ອນເຖິງການຕັ້ງສົມມຸດຖານແລະການຕັດສິນຂອງປະຊາຊົນ, ໂດຍບໍ່ກ່ຽວກັບຫຼັກຖານຫຼືວິທະຍາສາດ. ຄວາມເຊື່ອດັ່ງກ່າວເຮັດໃຫ້ເກີດການພິພາກສາທີ່ເປັນອັນຕະລາຍຕໍ່ຄົນໃນສັງຄົມ ແລະ ສິດທິຂອງພວກເຂົາ.

ການແກ້ໄຂການຈຳແນກທາງເພດຢູ່ໃນສານມີສອງຂົງເຂດທີ່ຕ້ອງສຸມໃສ່ຄື:

1. ປະຕິເສດຫຼັກຖານແລະການໂຕ້ແຍ້ງທີ່ອີງໃສ່ຄວາມເຊື່ອກ່ຽວກັບບົດບາດຍິງຊາຍທີ່ບໍ່ຖືກຕ້ອງ, ແລະ
2. ຄຸ້ມຄອງການປະພຶດຂອງບຸກຄົນໃນສານເພື່ອປ້ອງກັນການຈຳແນກເພດຢູ່ໃນຫ້ອງໄຕ່ສວນ.

## ຄວາມເຊື່ອກ່ຽວກັບບົດບາດຍິງຊາຍຕໍ່ກັບຫຼັກຖານ

ຄວາມເຊື່ອກ່ຽວກັບບົບດບາດຍິງຊາຍເພດສ້າງຄວາມເສຍຫາຍທີ່ແທ້ຈິງເມື່ອການກະທຳ ແລະຄຳເວົ້າຂອງຄົນເຮົາຖືກຕັດສິນໂດຍອີງໃສ່ການສົມມຸດຕິຖານທີ່ຕົນເອງມັກ. ຖ້າພະຍານບໍ່ຖືກເຊື່ອ ຫຼື ບໍ່ຖືກເຄົາລົບຍ້ອນເພດຂອງເຂົາ ຫຼື ການກະທຳຂອງໃຜຜູ້ຫນຶ່ງຈະຖືກຫຼຸດຜ່ອນຫຼືໃຫ້ອະໄພຍ້ອນບົດບາດຍິງຊາຍຂອງລາວ, ຄວາມເສຍຫາຍທາງດ້ານສັງຄົມແມ່ນຖືກຕ້ອງຕາມກົດຫມາຍ. ໃນທາງກົງກັນຂ້າມ, ສານແມ່ນບ່ອນທີ່ທຸກຄົນມີສິດເທົ່າທຽມກັນ, ບໍ່ພຽງແຕ່

ບົດບາດຍິງຊາຍ ແລະ ຄວາມເປັນເລີດທາງຕຸລາການໃນອາຊຽນ ການເຂົ້າເຖິງສານຂອງເຂົາເຈົ້າ, ແຕ່ຍັງຢູ່ໃນວິທີການນໍາສະເໜີປະຈັກພະ ຍານ ແລະ ຂໍ້ເທັດຈິງຂອງຄະດີຂອງເຂົາເຈົ້າ.

ຜູ້ພິພາກສາ ແລະ ຜູ້ທີ່ເຮັດວຽກຢູ່ໃນສານມີແນວໂນ້ມທີ່ຈະໄດ້ຮັບອິດທິພົນຈາກຄວາມເຊື່ອກ່ຽວກັບບົດບາດຍິງຊາຍຄືກັບຄົນອື່ນໃນສັງຄົມ. ການຮັບຮູ້ດັ່ງກ່າວ ຮຽກຮ້ອງໃຫ້ຜູ້ພິພາກສາມີຄວາມລະມັດລະວັງໃນການກວດສອບພື້ນຖານສໍາລັບການຕັດສິນຂອງຕົນເອງ, ກໍານົດ ແລະ ປະຕິເສດການຂໍ້ກ່າວຫາໂດຍອີງໃສ່ຄວາມເຊື່ອດັ່ງກ່າວ ແລະ ຮັບປະກັນວ່າຫ້ອງໄຕ່ສວນແລະຂະບວນການທາງດ້ານກົດຫມາຍແມ່ນບໍ່ມີໃຊ້ສົມມຸດຖານ ແລະ ຄວາມເຊື່ອດັ່ງກ່າວ.

ການຕັດສິນໃຈໂດຍອີງໃສ່ຄວາມເຊື່ອກ່ຽວກັບບົດບາດຍິງຊາຍ ຫຼື ຫຼັກຖານທີ່ນໍາສະເໜີໃນລັກສະນະຂອງການຈໍາແນກທໍາລາຍຄວາມໝັ້ນໃຈຂອງປະ ຊາຊົນ. ປະຊາຊົນທີ່ມີຄວາມສ່ຽງ, ລວມທັງຄົນຂ້າມເພດ, ຜູ້ມີສອງເພດ ແລະ ກຸ່ມຄົນຫຼາກຫຼາຍທາງເພດ, ເຫັນວ່າສານຈະບໍ່ປົກປ້ອງສິດຂອງເຂົາເຈົ້າ ຫຼື ບໍ່ແມ່ນບ່ອນທີ່ປອດໄພໃນການລາຍງານອາດຊະຍາກໍາ ແລະ ການປະພຶດທີ່ຜິດ. ເຂົາເຈົ້າສົງໄສກ່ຽວກັບຄວາມຊື່ສັດຂອງຂະບວນການທາງກົດໝາຍ ເພາະເຫັນວ່າບັນດາບັນດາຄວາມເຊື່ອເຫຼົ່ານັ້ນແມ່ນໄດ້ອີງໃສ່ການຍອມຮັບ, ແລະ ປະຕິບັດຊໍ້າຢູ່ໃນສານ.

ຄວາມເຊື່ອກ່ຽວກັບບົດບາດຍິງຊາຍ ອາດຈະເຮັດໃຫ້ມັນຍາກຂຶ້ນສໍາລັບແມ່ ຍິງ ຫຼື ຄົນຂ້າມເພດໃນການລາຍງານຄວາມຮຸນແຮງ ຫຼືດໍາເນີນຂັ້ນຕອນເພື່ອປົກປ້ອງສິດທິຂອງເຂົາເຈົ້າ. ເມື່ອຄະດີຢູ່ໃນສານ, ຜູ້ຖືກເຄາະຮ້າຍອາດຈະປະເຊີນກັບຄວາມກົດດັນຂອງຄອບຄົວແລະສັງຄົມແລະການໃສ່ຮ້າຍປ້າຍສີ.

ນິຍາມທົ່ວໄປກ່ຽວກັບຄວາມເຊື່ອເລື່ອງບົດບາດຍິງຊາຍໃນຄະດີທາງກົດ ໝາຍລວມມີການຕັ້ງສົມມຸດຖານກ່ຽວກັບບົດບາດຂອງແມ່ຍິງໃນຄອບຄົວ, ຄວາມໜ້າເຊື່ອຖື ຫຼື ຄວາມໜ້າເຊື່ອຖືຂອງເຂົາເຈົ້າ, ແລະ ຄວາມເສຍຫາຍທີ່ສຸດ, ຄວາມເຊື່ອກ່ຽວກັບການຂົ່ມຂືນທີ່ກ່າວໂທດແມ່ຍິງສໍາລັບພຶດຕິກໍາທາງອາຍາຂອງຜູ້ໂຈມຕີຂອງເຂົາເຈົ້າ. ຄວາມເຊື່ອເລື່ອງການຂົ່ມຂືນໃນການດໍາເນີນຄະດີຂອງສານເຮັດໃຫ້ຄວາມເສຍຫາຍຂອງອາຊະຍາກໍາຮ້າຍແຮງຂຶ້ນໂດຍການປ່ຽນການຕໍານິຕິຕຽນຜູ້ຖືກເຄາະຮ້າຍແທນທີ່ຈະສຸມໃສ່ການປະພຶດທາງອາຍາຂອງຜູ້ກະທໍາຜິດ.

ຄວວາມເຊື່ອກ່ຽວກັບການຂົ່ມຂືນໃນຂະບວນການຂອງສານເກີດຂຶ້ນເມື່ອຜູ້ພິພາກສາອະນຸຍາດໃຫ້ໄຕ່ຖາມຫຼືກວດຫຼັກຖານກ່ຽວກັບການຕັດສິນໃຈຂອງຜູ້ຖືກເຄາະຮ້າຍ, ການນຸ່ງຖື, ປະຫວັດຫຼືປະຕິກິລິຍາໃນກໍລະນີທີ່ຄວນຈະສຸມໃສ່ການກະທໍາຂອງຜູ້ກະທໍາຜິດ. ການອະນຸຍາດໃຫ້ມີຫຼັກຖານທີ່ມີລັກສະນະຈໍາແນກຫຼືຄໍາເວົ້າຢູ່ໃນຫ້ອງໄຕ່ສວນສື່ສານກັບແມ່ຍິງວ່າສານຈະບໍ່ປົກປ້ອງສິດທິຂອງເຂົາເຈົ້າຫຼືເຮັດໃຫ້ຜູ້ກະທໍາຜິດຮັບຜິດຊອບ. ແມ່ຍິງສູນເສຍຄວາມເຊື່ອຫມັ້ນໃນສານແລະຕຸລາການ.

ຄວາມເຊື່ອກ່ຽວກັບບົດບາດຍິງຊາຍຍັງເປັນອັນຕະລາຍຕໍ່ກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ ແລະ ຈໍາກັດຄວາມເປັນໄປໄດ້ຂອງຜູ້ຊາຍ ແລະເດັກຊາຍ, ເຊັ່ນດຽວກັນກັບແມ່ຍິງ ແລະ ເດັກຍິງ. ຄົນຂ້າມເພດແລະຄົນຫຼາກຫຼາຍທາງເພດປະເຊີນກັບການຈໍາແນກແລະການປະຕິບັດທີ່ບໍ່ດີໃນສັງຄົມ. ການຊ່ວຍ ເຫຼືອທາງດ້ານກົດໝາຍຂອງເຂົາເຈົ້າຕໍ່ກັບການປົກປ້ອງສິດທິແມ່ນຂຶ້ນກັບວ່າສານຈະປົກປ້ອງກຽດສັກສີຂອງເຂົາເຈົ້າ ແລະ ຮັກສາມາດຕະຖານຂອງການປະ ຕິບັດທີ່ຢ່າງເທົ່າທຽມກັນ. ສົມມຸດຖານແລະການຕັດສິນທີ່ອີງໃສ່ແນວຄວາມຄິດທີ່ລ້າສະໄຫກ່ຽວກັບບົດບບາດຍິງຊາຍແມ່ນບໍ່ສາມາດທີ່ຈະເປັນພື້ນຖາໃນການປ້ອງກັນການຕັດສິນທາງດ້ານກົດຫມາຍ.

## ການຈໍາແນກທາງເພດຢູ່ໃນຫ້ອງໄຕ່ສວນ

ວິທີການປະຕິບັດຕໍ່ປະຊາຊົນຢູ່ໃນຫ້ອງໄຕ່ສວນມີຄວາມສໍາຄັນຕໍ່ການເຂົ້າເຖິງຄວາມຍຸຕິທໍາແລະຄວາມເຊື່ອຫມັ້ນຂອງພວກເຂົາຕໍ່ການຕັດສິນຂອງສານ. ຖ້າທະນາຍຄວາມ, ພະນັກງານສານ, ຕໍາຫຼວດ ຫຼື ສາທາລະນະຊົນໄດ້ຮັບອະນຸຍາດໃຫ້ເວົ້າ ຫຼື ປະຕິບັດຕໍ່ປະຊາຊົນໃນທາງທີ່ຈໍາແນກ, ບໍ່ຖືກກວດກາໂດຍຜູ້ພິພາກສາ, ຄວາມຊອບທໍາຂອງຄໍາຕັດສິນຂອງຜູ້ພິພາກສາກໍຈະເກີດມີຄໍາຖາມ. ການຄຸ້ມຄອງຫ້ອງໄຕ່ສວນແມ່ນສ່ວນທີ່ສໍາຄັນຂອງວິທີທີ່ຜູ້ພິພາກສາສະແດງໃຫ້ຝ່າຍຕ່າງໆ ແລະ ສາທາລະນະຊົນເຫັນວ່າ ການຕັດສິນຂອງເຂົາເຈົ້າບໍ່ລໍາອຽງ, ມີຮາກຖານຢູ່ບົນຫຼັກການພື້ນຖານ ແລະ ລະບຽບກົດໝາຍເທົ່ານັ້ນ.

ການຈໍາແນກທາງເພດ ບໍ່ພຽງແຕ່ທໍາລາຍຄວາມເຊື່ອໝັ້ນໃນການຕັດ ສິນ, ແຕ່ຍັງສົ່ງຜົນກະທົບຕໍ່ສະພາບການເຮັດວຽກຂອງຜູ້ທີ່ຢູ່ໃນຫ້ອງໄຕ່ສວນ. ແມ່ຍິງ ແລະ ກຸ່ມຄົນຫຼາກຫຼາຍທາງເພດ ທີ່ເຮັດວຽກເປັນທະນາຍຄວາມ, ຜູ້ພິພາກສາ, ພະນັກງານ, ຫຼືພະນັກງານສານ ຫຼື ຜູ້ທີ່ເປັນພະຍານ ຫຼື ຜູ້ດໍາເນີນຄະດີກໍ່ປະສົບກັບສະພາບແວດລ້ອມໃນການເຮັດວຽກທີ່ເປັນສັດຕູ ແລະ ຖືກຈໍາແນກ. ຫຼັກການ Bangalore ໄດ້ອະທິບາຍບັນຊີລາຍຊື່ຂອງພື້ນຖານທີ່ບໍ່ກ່ຽວຂ້ອງ, ລະບຸວ່າຄໍາເວົ້າຫຼືການປະພຶດທີ່ປະຕິບັດຕໍ່ຄົນທີ່ແຕກຕ່າງກັນໂດຍອີງໃສ່ເຊື້ອຊາດ, ເພດ, ສາດສະຫນາ, ຊັ້ນວັນນະ, ຄວາມພິການ, ອາຍຸ, ສະຖານະພາບການແຕ່ງງານ, ລົດນິຍົມທາງເພດ, ແລະອື່ນໆກ່ຽວກັບຄວາມຫຼາກຫຼາຍແມ່ນລະເມີດພັນທະຂອງຜູ້ພິພາກສາທີ່ຈະສົ່ງເສີມ, ແລະ ປົກປ້ອງຄວາມສະເໝີພາບ. ຈາກນັ້ນ, ກໍກໍານົດຫ້າຂົງເຂດທີ່ຜູ້ພິພາກສາຄາດວ່າຈະປ້ອງກັນຫຼືຕອບສະຫນອງຕໍ່ການຈໍາແນກໃນຂະນະທີ່ການຄຸ້ມຄອງຫ້ອງໄຕ່ສວນຂອງພວກເຂົາ:

1. ຮັບຮູ້ແລະເຂົ້າໃຈຄວາມຫຼາກຫຼາຍໃນສັງຄົມລວມທັງເຊື້ອຊາດ, ເພດ, ສາດສະຫນາ, ຊັ້ນວັນນະ, ຄວາມພິການ, ອາຍຸ, ສະຖານະພາບການແຕ່ງງານ, ລົດນິຍົມທາງເພດ, ແລະຂົງເຂດອື່ນໆຂອງຄວາມຫຼາກຫຼາຍ.

2. ບໍ່ສະແດງຄວາມລຳອຽງຕໍ່ບຸກຄົນຫຼືກຸ່ມຄົນ ໂດຍບໍ່ເລືອກປະຕິບັດຕໍ່ຝ່າຍໃດຝ່າຍໜຶ່ງ, ທະນາຍຄວາມ, ພະນັກງານ ຫຼື ເພື່ອນຮ່ວມງານທີ່ແຕກຕ່າງກັນໂດຍອີງໃສ່ພື້ນຖານທີ່ບໍ່ກ່ຽວຂ້ອງດັ່ງທີ່ກ່າວມາ.
3. ບໍ່ອະນຸຍາດໃຫ້ພະນັກງານສານປະຕິບັດຕໍ່ປະຊາຊົນທີ່ມີຄວາມແຕກຕ່າງກັນໂດຍອີງໃສ່ພື້ນຖານດັ່ງກ່າວຫ
4. ບໍ່ອະນຸຍາດໃຫ້ທະນາຍຄວາມປະຕິບັດຕໍ່ປະຊາຊົນ, ຫຼືສ້າງການໂຕ້ຖຽງຫຼືຄຳເຫັນທີ່ອີງໃສ່ຄວາມລຳອຽງໃນເຫດຜົນທີ່ບໍ່ກ່ຽວຂ້ອງໃດໆ[10]

ຜູ້ພິພາກສາທີ່ຖືກວິໄນ ແລະ ກ່າວປະນາມຢ່າງເປີດເຜີຍຕໍ່ການປະພຶດ ຫຼືການໃຫ້ຄວາມເຫັນຂອງພວກເຂົາຢູ່ໃນຫຼາຍປະເທດ, ເຊື່ອມໂຍງຄວາມອັນຕະລາຍຂອງການສະແດງຄວາມຄິດເຫັນທາງເພດ ແລະ ຄວາມຊື່ສັດຂອງຂະບວນການທາງກົດໝາຍ. ຜູ້ພິພາກສາຄົນຫນຶ່ງໃນສະຫະລັດໄດ້ຖືກປະຕິບັດວິໄນຕໍ່ກັບອີເມລ໌ ແລະ ຄຳຄິດຄຳເຫັນທີ່ມີລັກສະນະເປັນສ່ວນຕົວ, ເປີດເຜີຍທັດສະນະການຈຳແນກທາງເພດເພດ ແລະ ຄວາມຄິດທີ່ດູຖູກຜູ້ຍິງຂອງລາວ. ລາວຖືກປົດອອກຈາກຕໍາແໜ່ງໃນການຕັດສິນທີ່ຂຽນວ່າ:

> “ປະລິມານຄວາມຄິດເຫັນຂອງທ່ານສິ່ງຜົນຫຼາຍກວ່າບັນຫາຂອງລົດຊາດ, ການຕົກແຕ່ງ ຫຼືຄວາມຄິດເຫັນສ່ວນຕົວ. ມັນເພີ່ມພູນກັບຜູ້ທີ່ສະແດງໃຫ້ເຫັນວ່າລາວບໍ່ເຫມາະກັບບັນລັງ .... ບໍ່ວ່າຈະເປັນເຊື້ອຊາດ, ເພດ, ລັດທິນິຍົມເພດຫຼືວິຊາສະເພາະ, ຄວາມຄິດເຫັນຂອງທ່ານເຮັດໃຫ້ມັນເປັນໄປບໍ່ໄດ້ ທີ່ທ່ານຈະຖືກປະຕິບັດຢ່າງຈິງຈັງໃນຖານະຜູ້ພິພາກສາທີ່ຈະມີຄວາມຍຸຕິທຳ ແລະ ບໍ່ລຳອຽງ. ທ່ານໄດ້ຕັດສິດຕົວເອງອອກຈາກບັນລັງ.”[11]

## ການປະຕິບັດສຳລັບຕຸລາການ

✓ ເຊີນຊວນໃຫ້ສັງຄົມພົນລະເຮືອນ, ກຸ່ມສົ່ງເສີມບົດບາດຍິງຊາຍ ແລະ ແມ່ຍິງ ແລະ ຜູ້ປົກປ້ອງສິດທິມະນຸດ ດຳເນີນການສັງເກດເບິ່ງສານກ່ຽວກັບຜົນກະທົບຂອງການຈຳແນກຍິງຊາຍ ໃນການປະຕິບັດຢູ່ໃນຫ້ອງໄຕ່ສວນ ແລະ ເຮັດວຽກເພື່ອແກ້ໄຂບັນຫາທີ່ໄດ້ພົບເຈີ.

✓ ຮັບຮອງເອົາຄຳແນະນຳກ່ຽວກັບພາສາ ແລະ ການປະພຶດຢູ່ໃນຫ້ອງໄຕ່ສວນທີ່ເປັນກາງທາງດ້ານບົດບາດຍິງຊາຍ.

✓ ກຳນົດແນວທາງປະຕິບັດ ຫຼື ຄຳແນະນຳໃຫ້ກັບທະນາຍຄວາມກ່ຽວກັບການປະພຶດຕົວໃນຫ້ອງໄຕ່ສວນທີ່ມີຄວາມອ່ອນໄຫວດ້ານບົດບາດຍິງຊາຍ.

### ມັນສະແດງອອກຄືແນວໃດ?

ແມ່ຍິງທີ່ເປັນພະຍານຢູ່ໃນສານກ່ຽວກັບຄະດີທາງທຸລະກິດໄດ້ຖືກຖາມວ່າລາວຮູ້ຫຼາຍຄືກັນກັບພະຍານຄົນອື່ນໆບໍ່.

ທະນາຍຄວາມແມ່ຍິງຖືກຂັດຂວາງ ແລະ ຫືອເຍາະເຍີ້ຍເມື່ອນລາວຢືນຢັນສິດທິຂອງລູກຄວາມຂອງລາວ.

ທະນາຍຄວາມແນະນຳວ່າຜູ້ພິພາກສາບໍ່ຄວນໄວ້ວາງໃຈປະຈັກພະຍານຂອງແມ່ຍິງເນື່ອງຈາກວ່າລາວບໍ່ໄດ້ຮັບການລ້ຽງດູຢ່າງພຽງພໍ, ດັ່ງນັ້ນຕ້ອງໄດ້ຮັບການຝຶກອົບຮົມ.

ການລະນຶກເຖິງເຫດການຂອງແມ່ຍິງໄດ້ຖືກຖາມ, ແລະລາວໄດ້ຖືກຖາມວ່າມີຜູ້ຊາຍທີ່ສາມາດສະໜັບສະໜູນປະຈັກພະຍານຂອງລາວບໍ່.

ທະນາຍຄວາມຫຼືຜູ້ພິພາກສາຂໍໃຫ້ພໍ່ຂອງຜູ້ຖືກເຄາະຮ້າຍຈາກການລ່ວງລະເມີດທາງເພດເພື່ອຕັດສິນໃຈໃຫ້ກັບລາວ, ໂດຍບໍ່ຂໍຄຳຄິເຫັນຈາກລາວເລີຍ.

ແມ່ຍິງທີ່ຖືກຂົ່ມຂືນທາງເພດແມ່ນຖືກຖາມກ່ຽວກັບປະຫວັດການນັດພົບທີ່ຜ່ານມາຂອງລາວຫຼືເຄື່ອງນຸ່ງຂອງລາວ.

ແມ່ຍິງທີ່ຖືກໄລ່ອອກຈາກບ່ອນເຮັດວຽກແມ່ນໄດ້ຮັບເງິນຫນ້ອຍເພາະວ່າລາວໄດ້ແຕ່ງງານແລ້ວ.

ຄວາມສາມາດຂອງແມ່ຍິງທີ່ຈະຮັບຜິດຊອບໃນຄະດີຂະຫນາດໃຫຍ່ແມ່ນມີຄຳຖາມເນື່ອງຈາກວ່າລາວມີລູກແລ້ວ.

ໃນການເປັນປະທານຫ້ອງໄຕ່ສວນ, ຜູ້ພິພາກສາມີຄວາມຮັບຜິດຊອບໃນການຮັບປະກັນວ່າທຸກຄົນ
- ທຸກພາກສ່ວນຂອງການດຳເນີນຄະດີ, ພະຍານ, ທະນາຍຄວາມ, ຜູ້ອື່ນໆຢູ່ໃນຫ້ອງໄຕ່ສວນ ແລະ ເພື່ອນຮ່ວມງານທີ່ຢູ່ບັນລັ້ງ.
- ຖືກປະຕິບັດດ້ວຍຄວາມເຄົາລົບ, ບໍ່ພຽງແຕ່ໂດຍຜູ້ພິພາກສາ, ແຕ່ໂດຍຜູ້ອື່ນໆຢູ່ໃນຫ້ອງໄຕ່ສວນ ແລະ ບໍ່ໄດ້ຮັບການຕັດສິນກ່ຽວກັບຄວາມຄິດເຫັນ ຫຼື ພຶດຕິກຳວ່າບໍ່ເຫມາະສົມ.

Source: UNODC, Gender-Related Issues in the Judiciary, Global Judicial Integrity Network, Pg. 13

10 https://www.unodc.org/documents/ji/knowledge_products/Gender_Paper_FINAL_DOHA.pdf Pg. 38-39

11 Letter of Suspension and Removal from Office (Arkansas Judicial Discipline & Disability Commission 6 August 2015) at 19, https://www.unodc.org/res/ji/import/disciplinary_proceedings/gender/maggio.pdf.

- ✓ ສະໜອງການຝຶກອົບຮົມໃຫ້ແກ່ພະນັກງານ ແລະ ພະນັກງານສານກ່ຽວກັບບົດບາດຍິງຊາຍ, ກຳນົດຄວາມຄາດຫວັງທີ່ຈະແຈ້ງກ່ຽວກັບຄວາມເປັນກາງລະຫວ່າງຍິງຊາຍ ແລະ ຄວາມສະເໝີພາບ.
- ✓ ສ້າງຕັ້ງການສະໜັບສະໜູນທີ່ເປັນມິດກັບເດັກນ້ອຍຢູ່ໃນຫ້ອງໄຕ່ສວນ ລວມທັງພື້ນທີ່ສ່ວນຕົວສຳລັບທະນາຍຄວາມເພື່ອພົບປະກັບພະຍານເດັກ ແລະ ການເຊື່ອມຕໍ່ວິດີໂອສຳລັບການເປັນພະຍານໃນຄອບຄົວແລະຄະດີອາຍາ.
- ✓ ສ້າງຫ້ອງພະຍານແຍກຕ່າງຫາກ, ຫນ້າຈໍແລະທາງເລືອກການເຊື່ອມຕໍ່ວິດີໂອສຳລັບຄະດີທີ່ກ່ຽວຂ້ອງກັບຄວາມຮຸນແຮງທາງເພດ.
- ✓ ຮັບປະກັນວ່າການຊ່ວຍເຫຼືອທາງດ້ານຈິດໃຈແມ່ນມີໃຫ້ແກ່ພະຍານ ແລະ ຜູ້ຖືກເຄາະຮ້າຍ ແລະ ຜູ້ພິພາກສາທຸກຄົນມີຄວາມຄຸ້ນເຄີຍກັບວິທີການສົ່ງຕໍ່ໄປຫາການບໍລິການເຫຼົ່ານີ້.

## ການປະຕິບັດສຳລັບຜູ້ພິພາກສາ

- ✓ ເອົາໃຈໃສ່ກັບພາສາ ແລະ ການເຄື່ອນໄຫວລະຫວ່າງທະນາຍຄວາມ ແລະ ພະຍານ ເພື່ອຮັບປະກັນວ່າລັກສະນະທາງເພດບໍ່ໄດ້ຖືກໃຊ້ເພື່ອທຳລາຍພະຍານ.
- ✓ ຕິດຕາມການຄົ້ນຄວ້າກ່ຽວກັບຄວາມເຊື່ອເລື່ອງການຂົ່ມຂືນ ແລະ ຄວາມເຊື່ອກ່ຽວກັບບົດບາດຍິງຊາຍໃນກົດໝາຍອາຍາ ແລະ ຄອບຄົວ.
- ✓ ກຳນົດແນວທາງປະຕິບັດ ຫຼື ຄຳແນະນຳໃຫ້ທະນາຍຄວາມກ່ຽວກັບການປະພຶດຕົວໃນຫ້ອງໄຕ່ສວນທີ່ມີຄວາມອ່ອນໄຫວດ້ານບົດບາດຍິງຊາຍ.
- ✓ ລະບຸຢ່າງຈະແຈ້ງໃນຕອນຕົ້ນຂອງແຕ່ລະຄະດີວ່າທ່ານຄາດຫວັງໃຫ້ທຸກຄົນຢູ່ໃນຫ້ອງໄຕ່ສວນປະຕິບັດຕາມມາດຕະຖານຂັ້ນສູງຂອງການຕ້ານການຈຳແນກແລະຄວາມສະເຫມີພາບ.
- ✓ ຮຽກຕົວທະນາຍຄວາມ, ພະນັກງານຂອງສານ ແລະ ພາກສ່ວນທີ່ນຳໃຊ້ພາສາທີ່ບໍ່ເໝາະສົມບໍ່ເຄົາລົບ, ຫຼື ມີລັກສະນະຈຳແນກຢູ່ໃນຫ້ອງໄຕ່ສວນຂອງທ່ານ.
- ✓ ໃຊ້ອຳນາດການຄຸ້ມຄອງຄະດີຂອງທ່ານເພື່ອຮັບປະກັນການດຳເນີນການທີ່ມີຄວາມລາບລື່ນ, ໂດຍແຈ້ງໃຫ້ຜູ້ເຄາະຮ້າຍຊາບຕະຫຼອດຂະບວນການ.
- ✓ ກຳນົດບາດກ້າວເພື່ອບໍ່ໃຫ້ຜູ້ຖືກເຄາະຮ້າຍຕ້ອງເປັນພະຍານຊ້ຳໆ ຫຼື ເລົ່າເລື່ອງຂອງເຂົາເຈົ້າຄືນໃໝ່, ຫຼື ຕ້ອງໃຫ້ພວກເຂົາກັບຄືນມາທຸກຄັ້ງ.
- ✓ ດຳເນີນການຈັດການສຳລັບພະຍານທີ່ມີຄວາມສ່ຽງທີ່ຈະເປັນພະຍານໃນພື້ນທີ່ສ່ວນຕົວ ຫຼືບໍ່ຈຳເປັນຕ້ອງປະເຊີນກັບຜູ້ລ່ວງລະເມີດຂອງພວກເຂົາໂດຍໃຊ້ຫນ້າຈໍຫຼືການເຊື່ອມຕໍ່ວິດີໂອ.
- ✓ ຮຽກຮ້ອງໃຫ້ທະນາຍຄວາມສະແດງໃຫ້ເຫັນຂັ້ນຕອນທີ່ເຂົາເຈົ້າໄດ້ປະຕິບັດເພື່ອປົກປ້ອງພະຍານທີ່ມີຄວາມສ່ຽງ ແລະ ຜູ້ຖືກເຄາະຮ້າຍຈາກຄວາມທຸກທໍລະມານກ່ອນທີ່ຈະໂທຫາພະຍານນັ້ນ (ການຊ່ວຍເຫຼືອທາງດ້ານຈິດໃຈ, ຫ້ອງພະຍານສ່ວນຕົວ, ການໃຊ້ຫນ້າຈໍ, ການນຳໃຊ້ການບັນທຶກວິດີໂອ ໃນກໍລະນີທີ່ເປັນໄປໄດ້).

## ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ

- 🕮 Bangkok General Guidance for Judges on Applying a Gender Perspective in Southeast Asia -
- 🕮 Judicial Decision Making with a Gender Perspective
- 🕮 Scandalizing the judiciary: An analysis of the uneven response of the Supreme Court of India to sexual harassment allegations against judges

ສັງລວມບັນຫາໂດຍຫຍໍ້ 3

# ບົດບາດຍິງຊາຍທີ່ເປັນແນວຄວາມຄິດແບບກວມລວມ

---

## ຄຳນິຍາມ:

ບົດບາດຍິງຊາຍ ໝາຍເຖິງຄຸນລັກສະນະຂອງຜູ້ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍ ທີ່ສ້າງຂຶ້ນໃນສັງຄົມ ເຊິ່ງປະກອບມີມາດຕະຖານ, ພຶດຕິກຳແລະພາລະບົດບາດທີ່ກ່ຽວຂ້ອງກັບການເປັນແມ່ຍິງ, ຜູ້ຊາຍ, ເດັກຍິງຫຼືເດັກຊາຍ, ເຊັ່ນດຽວກັນກັບຄວາມສຳພັນຕໍ່ກັນແລະກັນ. ໃນຖານະເປັນການກຳນົດທາງສັງຄົມ, ບົດບາດຍິງຊາຍມີຄວາມແຕກຕ່າງກັນໃນແຕ່ລະສັງຄົມແລະສາມາດມີການປ່ຽນແປງໄດ້ຕາມໄລຍະເວລາ.

ບົດບາດຍິງຊາຍເປັນລຳດັບຂັ້ນ ແລະ ສ້າງຄວາມບໍ່ສະເໝີພາບທີ່ຕິດພັນກັບຄວາມບໍ່ສະເໝີພາບທາງດ້ານສັງຄົມ ແລະ ເສດຖະກິດອື່ນໆ. ການຈຳແນກຕາມບົດບາດຍິງຊາຍຄິດພັນກັບປັດໄຈອື່ນໆຂອງການຈຳແນກເຊັ່ນ: ຊົນເຜົ່າ, ສະຖານະພາບເສດຖະກິດສັງຄົມ, ຄວາມພິການ, ອາຍຸ, ທີ່ຕັ້ງທາງພູມສັນຖານ, ເອກະລັກທາງເພດ ແລະ ລົດນິຍົມທາງເພດ, ແລະອື່ນໆ. ສິ່ງນີ້ເອີ້ນວ່າການຕິດພັນແລະສິ່ງຜົນຕໍ່ກັນ.

Source: [World Health Organization]

---

## ຄວາມຄິດເຫັນ: ຜົນສະທ້ອນຕໍ່ຄວາມເປັນເລີດທາງດ້ານຕຸລາການ

ວິທະຍາສາດຂອງຄວາມເຂົ້າໃຈກ່ຽວກັບບົດບາດຍິງຊາຍ ແລະ ເພດ ກຳລັງໄດ້ຮັບການພັດທະນາ, ສິ່ງຜົນໃຫ້ມີການປ່ຽນແປງດ້ານພາສາ, ປະເພດໃຫມ່ຂອງການກຳນົດບົດບາດຍິງຊາຍ ແລະ ສິ່ງທ້າທາຍໃຫມ່ຕໍ່ສະຖາບັນກົດຫມາຍ. ຄວາມເຊື່ອກ່ຽວກັບບົດບາດຍິງຊາຍແມ່ນມັກຈະອີງໃສ່ສົມມຸດຖານຂອງສອງເພດທີ່ສອດຄ່ອງກັບເພດທາງຊີວະວິທະຍາຂອງໃຜຜູ້ໜຶ່ງ. ຢ່າງໃດກໍ່ຕາມ, ຄວາມເຊື່ອກ່ຽວກັບບົດບາດຍິງຊາຍເຫຼົ່ານີ້ ບໍ່ເຫມາະສົມກັບຄວາມເປັນຈິງຂອງຄົນສ່ວນໃຫຍ່, ແລະ ສຳລັບບາງຄົນກໍ່ສ້າງຄວາມເສຍຫາຍທີ່ແທ້ຈິງ. ຄົນຂ້າມເພດ, ຄົນສອງເພດ ແລະ ຄົນຫຼາກຫຼາຍທາງເພດຖືກຍົກເວັ້ນ ຫຼື ຖືກຈຳແນກເມື່ອເຂົາເຈົ້າຖືກປະຕິເສດການບໍລິການ ຫຼື ການປົກປ້ອງເນື່ອງຈາກແນວຄວາມຄິດທີ່ລ້າສະໄໝກ່ຽວກັບບົດບາດຍິງຊາຍ. ສານມັກຈະຖືກຮ້ອງຂໍໃຫ້ດຳເນີນການຕັດສິນກ່ຽວກັບສິດ ແລະ ສິດທິໃນການບໍລິການສຳລັບຄົນທີ່ມີເອກະລັກ ແລະ ຄວາມຕ້ອງການບໍ່ເໝາະສົມກັບປະເພດຂອງບົດບາດຍິງຊາຍຂອງພວກເຂົາ.

ໃນຖານະທີ່ຜູ້ພິພາກສາພິຈາລະນາຄະດີຫຼືຕັດສິນບັນຫາເຫຼົ່ານີ້, ມີຂັ້ນຕອນງ່າຍໆທີ່ຮັບປະກັນວ່າຫ້ອງໄຕ່ສວນມີຄວາມປອດໄພ ແລະ ມີຄວາມເຄົາລົບຕໍ່ຜູ້ດຳເນີນຄະດີທັງຫມົດ ແລະ ສະແດງໃຫ້ເຫັນວິທີການທີ່ບໍ່ມີອັກຄະຕິ ແລະ ເປີດໃຈໃນເວລາພິຈາລະນາຫຼັກຖານ.

ການນຳໃຊ້ ແລະ ການຮຽກຮ້ອງໃຫ້ທຸກຄົນຢູ່ໃນຫ້ອງໄຕ່ສວນຂອງທ່ານໃຊ້ຊື່, ນາມສະກຸນ ແລະ ຫົວຂໍ້ທີ່ພະຍານຫຼືຜູ້ດຳເນີນຄະດີມັກສະ ແດງເຖິງຄວາມເຄົາລົບ ແລະ ເຕືອນຄົນທີ່ໂຕ້ຖຽງກ່ຽວກັບແນວຄວາມຄິດທີ່ບໍ່ມີຕົວຕົນຂອງສິດທິທີ່ການໂຕ້ຖຽງເຫຼົ່ານີ້ມີຜົນສະທ້ອນທີ່ແທ້ຈິງໃນຊີວິດຂອງປະຊາຊົນ. ປະຈຸບັນສານຫຼາຍແຫ່ງອະນຸຍາດໃຫ້ປະຊາ ຊົນແນະນຳຕົວເອງ ແລະ ກຳນົດໃຫ້ທຸກຄົນໃຊ້ຊື່, ຄຳນຳໜ້າ ຫຼື ຄຳທີ່ໃຊ້ເອີ້ນຊື່, ໂດຍບໍ່ຄຳນຶງເຖິງຊື່ ຫຼື ເພດທີ່ຖືກຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ. ສິ່ງນີ້ສາມາດເປັນເຄື່ອງຫມາຍທີ່ສຳຄັນຂອງຄວາມເຄົາລົບຕໍ່ຜູ້ໃດຫນຶ່ງທີ່ທ້າທາຍຊື່ທາງກົດຫມາຍຂອງເຂົາເຈົ້າ, ສະຖານະພາບການແຕ່ງງານ, ສະຖານະທາງຊີວະວິທະຍາ ຫຼື ລັກສະນະສອງເພດ ທີ່ກຳນົດຫຼືປ້ອງກັນການຫັນປ່ຽນຂອງເອກະລັກທາງເພດຂອງພວກເຂົາ.

ກໍລະນີທີ່ກ່ຽວຂ້ອງກັບການຫວາດກົວທາງເພດ ຫຼື ລັດນິຍົມທາງເພດມັກຈະຕິດພັນກັບບົດບາດຍິງຊາຍ. ການຫວາດກົວທາງເພດມັກຈະອີງໃສ່ຄວາມເຊື່ອແບບຜິດໆກ່ຽວກັບບົດບາດຍິງຊາຍຕໍ່ກັບວິທີທີ່ຜູ້ຊາຍແລະແມ່ຍິງຄວນປະຕິບັດ. ການຮູ້ກ່ຽວກັບການຈໍາແນກທາງເພດແລະການຈໍາແນກປະເພດອື່ນໆ ຈະຊ່ວຍໃຫ້ຜູ້ພິພາກສາກໍານົດແລະປະຕິ ເສດສົມມຸດຖານທາງເພດໄດ້ງ່າຍຂຶ້ນ.

## ການປະຕິບັດຂອງຕຸລາການ

- ✓ ໃຊ້ຄໍາສັບກ່ຽວກັບເພດທີ່ກວມລວມຢູ່ໃນແບບຟອມຂອງສານ ແລະ ໃນຖານຂໍ້ມູນຂອງສານ.
- ✓ ຮັບຮອງເອົາຄູ່ມືກ່ຽວກັບພາສາ ແລະ ການປະພຶດໃນຫ້ອງໄຕ່ສວນທີ່ມີຄວາມລະອຽດອ່ອນທາງເພດ.
- ✓ ກໍານົດແນວທາງປະຕິບັດ ຫຼື ຄໍາແນະນໍາໃຫ້ທະນາຍຄວາມກ່ຽວກັບການປະພຶດຕົວໃນຫ້ອງໄຕ່ສວນທີ່ມີຄວາມອ່ອນໄຫວຕໍ່ດ້ານບົດບາດຍິງຊາຍ.
- ✓ ສະໜອງການຝຶກອົບຮົມໃຫ້ແກ່ພະນັກງານ ແລະພະນັກງານສານກ່ຽວກັບບົດບາດຍິງຊາຍ, ກໍານົດຄວາມຄາດຫວັງທີ່ຈະແຈ້ງກ່ຽວກັບຄວາມເປັນກາງລະຫວ່າງຍິງຊາຍ ແລະ ຄວາມສະເໝີພາບ.

## ການປະຕິບັດສໍາລັບຜູ້ພິພາກສາ

- ✓ ເຊີນທະນາຍຄວາມ ແລະ ພະຍານມາແນະນໍາຕົນເອງ. ໃຊ້ຊື່, ນາມມະຍົດ ແລະຄໍານາມທີ່ເຂົາເຈົ້າໃຊ້.
- ✓ ຕິດຕາມການຄົ້ນຄວ້າ ແລະ ຫຼັກຖານໃໝ່ກ່ຽວກັບຜົນກະທົບທີ່ເປັນອັນຕະລາຍຂອງການໃຊ້ຄວາມເຊື່ອແບບຜິດໆກ່ຽວກັບບົດບາດຍິງຊາຍ.
- ✓ ແບບຢ່າງການເຄົາລົບສໍາລັບຜູ້ທີ່ມີຄວາມຫຼາກຫຼາຍທາງເພດ, ລວມທັງຄົນຂ້າມເພດ, ຄົນສອງເພດ ທີ່ຢູ່ໃນຫ້ອງໄຕ່ສວນຂອງທ່ານ.
- ✓ ຮຽກທະນາຍຄວາມ, ພະນັກງານຂອງສານ ແລະພາກສ່ວນທີ່ນໍາໃຊ້ພາສາທີ່ບໍ່ ເໝາະສົມ, ບໍ່ເຄົາລົບ, ຫຼືຈໍາແນກຢູ່ໃນຫ້ອງໄຕ່ສວນຂອງທ່ານ.

### ມັນສະແດງອອກຄືແນວໃດ?

ພະຍານທີ່ລະບຸວ່າຕົນເອງເປັນແມ່ຍິງ ແນະນໍາຕົນເອງ, ແຕ່ທະນາຍຄວາມຢືນຢັນໃຫ້ໃຊ້ຊື່ໃນໃບຢັ້ງຢືນການເກີດຂອງລາວ, ເນັ້ນຫນັກຄໍາວ່າ 'ທ້າວ'. ແຕ່ລະຄັ້ງ ແລະຫົວເຍາະເຍີ້ຍ. ພະຍານຮູ້ສຶກອາຍ, ແລະ ໃຈຮ້າຍ.

ກ່ອນທີ່ສານຈະເລີ່ມ, ເຈົ້າໜ້າທີ່ຕໍາຫຼວດຄົນໜຶ່ງໄດ້ເອົ້າດັງໆໝິ່ນປະໝາດຄໍາຄິດເຫັນກ່ຽວກັບທະນາຍຄວາມທີ່ເປັນເພດ ຍິງ, ແນະນໍາວ່າບໍ່ຄວນອະນຸຍາດໃຫ້ລາວຢູ່ໃນຫ້ອງໄຕ່ສວນ. ລູກຄວາມຂອງລາວແລະພະຍານທັງຫມົດໄດ້ຍິນຄໍາຄິດຄໍາເຫັນດັ່ງກ່າວ.

## ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ

- 🕮 Judicial Decision Making with a Gender Perspective

ສັງລວມບັນຫາໂດຍຫຍໍ້ 4

# ການແກ້ໄຂບັນຫາການຈໍາແນກທາງເພດໃນການຕັດສິນທາງດ້ານກົດຫມາຍ

### ຄໍານິຍາມ:

"ການແບ່ງແຍກ, ການກີດກັ້ນ ຫຼື ການຈໍາກັດທີ່ເກີດຂຶ້ນບົນພື້ນຖານທາງເພດ ເຊິ່ງມີຜົນກະທົບຫຼືມີຈຸດປະສົງທີ່ຈະແຕະຕ້ອງການຮັບຮູ້, ຄວາມສຸກ ຫຼື ອໍານາດຂອງແມ່ຍິງ, ໂດຍບໍ່ຄໍານຶງເຖິງສະຖານະພາບການແຕ່ງງານຂອງເຂົາເຈົ້າ, ບົນພື້ນຖານຄວາມສະເຫມີພາບຂອງຜູ້ຊາຍແລະແມ່ຍິງ, ຂອງສິດທິມະນຸດ ແລະ ສິດເສລີພາບພື້ນຖານທາງດ້ານການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທໍາ, ພົນລະເຮືອນ ຫຼືຂົງເຂດອື່ນໆ" [ອີງການສະຫະປະຊາຊາດ, 1979. 'ສົນທິສັນຍາກ່ຽວກັບການລົບລ້າງທຸກຮູບແບບການຈໍາແນກຕໍ່ແມ່ຍິງ,' ມາດຕາ 1].

ການຈໍາແນກສາມາດມາຈາກທັງກົດຫມາຍ (de jure) ຫຼື ຈາກການປະຕິບັດຕົວຈິງ (de facto). ສົນທິສັນຍາ CEDAW ຮັບຮູ້ ແລະ ແກ້ໄຂທັງສອງຮູບແບບຂອງການຈໍາແນກ, ບໍ່ວ່າຈະຢູ່ໃນກົດໝາຍ, ນະໂຍບາຍ, ຂັ້ນຕອນ ຫຼື ການຈັດຕັ້ງປະຕິບັດຕ່າງໆ.

Source: UNICEF

## ຄວາມຄິດເຫັນ: ຜົນສະທ້ອນຕໍ່ຄວາມເປັນເລີດທາງດ້ານຕຸລາການ

### ຫຼີກເວັ້ນການໃຊ້ຄວາມຄິດເຫັນສ່ວນຕົວ

ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການຕັດສິນຂອງສານແມ່ນຮາກຖານຢູ່ໃນຂະບວນການທີ່ມີຄວາມໂປ່ງໃສ ແລະ ຍຸຕິທໍາ ທີ່ມີການສື່ສານຢູ່ໃນການຕັດສິນ. ການຕັດສິນທັງໝົດ, ບໍ່ວ່າຈະເປັນແບບເປັນລາຍລັກອັກສອນ ຫຼື ແບບປາກເປົ່າ, ແມ່ນໂອກາດທີ່ຈະເສີມສ້າງຄວາມສະເໝີພາບ. ການຕັດສິນບໍ່ຄວນປະກອບດ້ວຍຄວາມຄິດເຫັນສ່ວນບຸກຄົນຂອງຜູ້ພິພາກສາ ຫຼື ການອ້າງອີງເຖິງຄວາມເຊື່ອສ່ວນບຸກຄົນ. ການໃຊ້ຄວາມຄິດເຫັນສ່ວນຕົວທີ່ບໍ່ກ່ຽວຂ້ອງ ຈະເຮັດໃຫ້ປະຊາຊົນມີຂໍ້ສົງໄສກ່ຽວກັບການຕັດສິນວ່າອີງໃສ່ການປະເມີນທີ່ຍຸຕິທໍາ, ມີຄວາມເປັນກາງບົນພື້ນຖານຂອງຫຼັກຖານຫຼືບໍ່.

ໃນເວລາທີ່ເກີດມີຄວາມລໍາອຽງ, ຄວາມເຊື່ອແບບຜິດ ແລະ ອັກຄະຕິ ບໍ່ວ່າຈະຮູ້ຕົວ ຫຼື ບໍ່ຮູ້ຕົວ, ໄດ້ສົ່ງຜົນໃຫ້ຜູ້ພິພາກສາຕີຄວາມໝາຍຂອງກົດໝາຍ, ລະບົບຍຸຕິທໍາກາຍເປັນກົນໄກໃນການຮັກສາຄວາມບໍ່ສະເໝີພາບຫຼາຍກວ່າການປົກປ້ອງສິດສະເໝີພາບ ແລະ ກຽດສັກສີຂອງມະນຸດ.[12]

### ການນໍາໃຊ້ພາສາທີ່ເປັນກາງ

ພາສາທີ່ໃຊ້ໃນການຕັດສິນຂອງສານແມ່ນສໍາຄັນຕໍ່ກັບຄວາມເຊື່ອຫມັ້ນຂອງພາກສ່ວນຕ່າງໆ ແລະ ສາທາລະນະຊົນ. ການຕັດສິນທີ່ເປັນລາຍລັກອັກສອນແມ່ນພື້ນຖານສໍາລັບການລາຍງານໃຫ້ແກ່ສື່ມວນຊົນ ແລະ ມັກຈະເປັນວິທີດຽວທີ່ປະຊາຊົນໄດ້ຮຽນຮູ້ກ່ຽວກັບຄະດີຫຼືຫຼັກການທາງດ້ານກົດຫມາຍ. ການເອົາໃຈໃສ່ຢ່າງລະມັດລະວັງຕໍ່ພາສາທີ່ນໍາໃຊ້ໃນການສື່ສານກັບປະຊາຊົນ ເປັນສ່ວນໜຶ່ງທີ່ຜູ້ພິພາກສາຕັດສິນຮັກສາຄວາມຊື່ສັດໃນຂະບວນການຕັດສິນ.

12 UNODC, Gender-Related Issues in the Judiciary, Global Judicial Integrity Network, Pg. 13

ການນຳໃຊ້ພາສາທີ່ເປັນກາງກ່ຽວກັບບົດບາດຍິງຊາຍ ແມ່ນສ່ວນຫນຶ່ງຂອງການສະແດງຄວາມເຄົາລົບກັບທຸກຄົນໃນຂະບວນການຂອງສານ ເຊິ່ງຍັງໄດ້ເຜີຍແຜ່ໃຫ້ປະຊາຊົນໄດ້ອ່ານຄຳຕັດສິນ ວ່າຫ້ອງໄຕ່ສວນເປັນສະຖານທີ່ທີ່ໃຫ້ຄວາມເຄົາລົບ ແລະ ເອົາໃຈໃສ່ຕໍ່ກັບຄວາມສະເໝີພາບ.

ການຕັດສິນໃຈຕ່າງໆແມ່ນບໍ່ຄວນເຮັດຊ້ຳ ຫຼື ຍ້ຳຄືນກ່ຽວກັບການຈຳແນກທາງເພດ ຫຼື ພາສາໃນການຈຳແນກທີ່ໃຊ້ໂດຍທະນາຍ ຄວາມ ຫຼື ພະຍານ.ໃນທາງກົງກັນຂ້າມ, ຜູ້ພິພາກສາສາມາດສ້າງແບບຢ່າງຄວາມຄາດຫວັງການປະພຶດທີ່ເຄົາລົບຢູ່ໃນສານໂດຍການໃຊ້ຄຳນຳໜ້າຊື່, ຊື່ ແລະ ຄຳນາມທີ່ພະຍານ ແລະຝ່າຍຕ່າງໆໃຊ້ເອີ້ນແທນຕົນເອງ. ລະມັດລະວັງເພື່ອຫຼີກລ່ຽງ ຫຼື ເວົ້າກ່ຽວກັບຄວາມເຊື່ອເລື່ອງການຂົ່ມຂືນຢູ່ໃນພາສາທີ່ນຳໃຊ້ໃນການຕັດສິນການລ່ວງລະເມີດທາງເພດ ເພື່ອສົ່ງສື່ສານໄປຫາຕຳຫຼວດ ແລະທະນາຍຄວາມກ່ຽວກັບການປະພຶດທີ່ຄາດວ່າຈະຢູ່ໃນຄະດີໃນອະນາຄົດ. ມີຄວາມຊັດແຈນກ່ຽວກັບສະຖານະພາບທາງດ້ານກົດໝາຍ ແລະ ສິດທິຂອງຝ່າຍຕ່າງໆ ເຜີຍແຜ່ການສານຕັດສິນຂອງສານຕໍ່ສາທາລະນະຊົນ ແລະ ສື່ມວນຊົນກ່ຽວກັບຄວາມສຳຄັນຂອງສິດທິທີ່ຢູ່ໃນແຕ່ລະຄະດີ.

ຄວາມພະຍາຍາມຕ່າງໆເຫຼົ່ານີ້ ຊ່ວຍສ້າງຄວາມເຂົ້າໃຈຂອງປະຊາຊົນກ່ຽວກັບສິດທິທາງດ້ານກົດຫມາຍ, ສ້າງຄວາມເຊື່ອຫມັ້ນໃນລະບົບກົດຫມາຍ ແລະ ປ່ຽນວັດທະນະທຳຂອງການຈຳແນກທາງເພດ ແລະ ການຈຳແນກຢູ່ໃນສັງຄົມ.

ຄູ່ມືດຳເນີນງານ ແລະ ເອກະສານທາງກົດໝາຍທີ່ໃຊ້ສັບພາສາແບບທຳມະດາ ສາມາດເປັນເຄື່ອງມືທີ່ເປັນປະໂຫຍດສຳລັບຜູ້ພິພາກສາເພື່ອກຳນົດກ່ຽວກັບພາສາທີ່ມີບັນຫາໃນລັກສະນະການຈຳແນກ ແລະ ປ່ຽນແທນດ້ວຍພາສາແບບທົ່ວໄປທີ່ມີຄວາມຖືກຕ້ອງ ແລະ ສະແດງຄວາມເຄົາລົບຫຼາຍຂຶ້ນ.

## ການປະຕິບັດສຳລັບຕຸລາການ

- ✓ ຈັດກອງປະຊຸມຝຶກອົບຮົມເປັນປົກກະຕິສຳລັບຜູ້ພິພາກສາກ່ຽວກັບມາດຕະຖານໃຫມ່ໃນເຕັກນິກການຂຽນພາສາແບບສາມັນ.
- ✓ ທົບທວນຜົນກະທົບທາງດ້ານບົດບາດຍິງຊາຍ ລວມທັງຂໍ້ມູນສ່ວນຕົວ, ຊື່, ຊື່ເດັກນ້ອຍ, ທີ່ຢູ່ ແລະ ຂໍ້ມູນທາງດ້ານການເງິນຢູ່ໃນຄຳຕັດສິນຂອງສານ.
- ✓ ອອກຄຳແນະນຳທີ່ຊັດເຈນກ່ຽວກັບການຫລີກ ລ່ຽງການອອກຄຳເຫັນແລະຄວາມຄິດເຫັນສ່ວນບຸກຄົນໃນການຕັດສິນຂອງສານ ແລະ ການປະຕິເສດຫຼືແກ້ໄຂການການຕີຄວາມໝາຍແບບຜິດໆຂອງສື່ມວນຊົນຕໍ່ກັບຜູ້ດຳເນີນຄະດີ ແລະພະຍານ.
- ✓ ກະກຽມຮ່າງເອກະສານການຕັດສິນຂອງສານ ແລະ ຄູ່ມືນຳເນີນງານທີ່ໃຊ້ພາສາທີ່ເປັນກາງທາງເພດ.

## ມັນສະແດງອອກຄືແນວໃດ?

ໃນເວລາຂຽນຄຳຕັດສິນຄະດີການລ່ວງລະເມີດທາງເພດ ທີ່ຜູ້ຖືກເຄາະຮ້າຍມີອາຍຸ 14 ປີ ຖືກຂົ່ມຂືນໂດຍຜູ້ທີ່ມີອາຍຸ 48 ປີ, ຜູ້ພິພາກສາອະທິບາຍວ່າຜູ້ຖືກເຄາະຮ້າຍເປັນເດັກນ້ອຍ.

ພວກເຂົາປະຕິເສດພາສາທີ່ທະນາຍຄວາມຝ່າຍຈຳເລີຍນຳໃຊ້ເອີ້ນລູກຄວາມຂອງລາວວ່າ ຜູ້ຍິງຫນຸ່ມນ້ອຍ ແລະ ບອກວ່າລາວເປັນຜູ້ກະຕຸ້ນໃຫ້ມີການພົວພັນທາງເພດ. ຜູ້ພິພາກສາຮູ້ວ່າສື່ມວນຊົນຈະລາຍງານກ່ຽວກັບຄະດີນີ້ ແລະ ມັນເປັນສິ່ງສຳຄັນທີ່ປະຊາຊົນຈະຮັບຂໍ້ມູນຂ່າວສານຢ່າງຖືກຕ້ອງ ວ່າຜູ້ຖືກເຄາະຮ້າຍແມ່ນເດັກນ້ອຍ.

ການຕັດສິນກ່ຽວກັບຜູ້ຍິງທີ່ກ່ຽວຂ້ອງກັບຂໍ້ຂັດແຍ້ງທາງທຸລະກິດ ບໍ່ຈຳເປັນຕ້ອງມີການອ້າງເຖິງສະຖານະພາບການແຕ່ງງານຂອງລາວ ຫຼື ບອກວ່າລາວມີລູກແລ້ວ, ຫຼີກເວັ້ນການໃຊ້ຄວາມເຊື່ອກ່ຽວກັບບົດບາດຍິງຊາຍແບບຜິດໆທີ່ບໍ່ກ່ຽວຂ້ອງກັບການຕັດສິນ.

## ການປະຕິບັດສຳລັບຜູ້ພິພາກສາ

- ✓ ກຳນົດຄວາມຄາດຫວັງທີ່ຊັດເຈນຕັ້ງແຕ່ຕອນເລີ່ມຕົ້ນຂອງແຕ່ລະຄະດີທີ່ທ່ານຄາດຫວັງໃຫ້ທຸກຄົນຢູ່ໃນຫ້ອງໄຕ່ສວນອ້າງອີງເຖິງຝ່າຍຕ່າງໆ ແລະ ພະຍານຢ່າງຖືກຕ້ອງກ່ຽວກັບອາຍຸ, ເພດແລະ ແຮງຈູງໃຈ, ຫຼີກເວັ້ນການໃຊ້ສັບພາສາທີ່ມີຄວາມລະອຽດອ່ອນ.
- ✓ ພ້ອມທີ່ຈະແຊກແຊງທະນາຍຄວາມທີ່ໃຊ້ສັບພາສາທີ່ບໍ່ຖືກ ຕ້ອງ ຫຼື ເປັນການຈຳແນກທາງເພດໃນການກ່າວເຖິງແມ່ຍິງແລະ ເດັກຍິງ, ຮັບຮູ້ຜົນກະທົບຂອງຂະບວນການພິຈາລະນາຄະດີຕໍ່ພະຍານຫຼືຜູ້ຖືກເຄາະຮ້າຍ.
- ✓ ການນຳໃຊ້ສັບພາສາທີ່ສະແດງເຖິງຄວາມເຄົາລົບຕໍ່ແມ່ຍິງ, ເດັກຍິງ ແລະ ກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ.

## ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ

- 📖 Bangkok General Guidance for Judges on Applying a Gender Perspective in Southeast Asia
- 📖 Judicial Decision Making with a Gender Perspective

ສັງລວມບັນຫາໂດຍຫຍໍ້ 5

# ການເປັນຕົວແທນດ້ານບົດບາດຍິງ ຊາຍໃນລະບົບຕຸລາການ

## ຄໍານິຍາມ:

ຜູ້ທີ່ພວກເຮົາເຫັນວ່າເປັນຕົວແທນຂອງພວກເຮົາໃນສານແມ່ນມີຄວາມສໍາຄັນ. ປະຊາຊົນກໍຄືການມີຄວາມຫຼາກຫຼາຍທາງເພດທີ່ເປັນຕົວແທນຢູ່ໃນຂັ້ນການບໍລິຫານຄຸ້ມຄອງຂອງລະບົບຕຸລາການຫຼາຍຂຶ້ນ. ຜູ້ພິພາກສາທີ່ມີຄວາມຫຼາກຫຼາຍ ສາມາດຮັບປະກັນວິທີການດໍາເນີນການທີ່ມີຄວາມສົມດູນໃນການບັງຄັບໃຊ້ກົດຫມາຍ ແລະ ການປະຕິບັດຄວາມສະເຫມີພາບ, ເຊິ່ງເຮັດໃຫ້ປະຊາຊົນມີຄວາມໄວ້ວາງໃຈແລະຄວາມເຊື່ອຫມັ້ນຕໍ່ລັດ.

Source: Evelyn Edroma, Policy Specialist, Rule of Law, Security and Human Rights Crisis Bureau, UNDP

## ຄໍາຄິດເຫັນ: ຜົນສະທ້ອນຕໍ່ຄວາມເປັນເລີດທາງດ້ານຕຸລາການ

### ການແຕ່ງຕັ້ງຄະນະຕຸລາການທີ່ມີຄວາມຫຼາກຫຼາຍ

ງການຕຸລາການທີ່ສະທ້ອນເຖິງລັກສະນະດ້ານປະຊາກອນຂອງສັງຄົມໃນການເສີມສ້າງລະບຽບກົດໝາຍ ແລະ ຄວາມເຊື່ອໝັ້ນຂອງປະຊາຊົນໃນສອງແບບ. ແບບທໍາອິດ, ຜູ້ຄົນເຫັນຄົນທີ່ມີເອກະລັກ ແລະ ປະສົບການຊີວິດທີ່ຄ້າຍຄືກັນຢູ່ໃນຕໍາແຫນ່ງທີ່ມີອໍານາດ ກໍເຮັດໃຫ້ພວກເຂົາມີຄວາມເຊື່ອຫມັ້ນເພີ່ມຂຶ້ນວ່າລະບົບກົດຫມາຍຈະປະຕິບັດຕໍ່ເຂົາເຈົ້າຢ່າງເທົ່າທຽມກັນ. ແບບທີສອງ, ຜູ້ພິພາກສາທີ່ມີປະສົບການຊີວິດທີ່ແຕກຕ່າງກັນ ມີລະດັບຄວາມຮູ້ແລະ ຄວາມເຂົ້າໃຈທີ່ແຕກຕ່າງກັນກ່ຽວກັບຜົນກະທົບຂອງກົດ ຫມາຍ. ພື້ນຖານຄວາມຮູ້ທີ່ກວ້າງຂວາງຂອງຕຸລາການ ຊ່ວຍເສີມສ້າງພື້ນຖານຮ່ວມກັນໃນການຕັດສິນ.

ຄວາມອ່ອນໄຫວທາງດ້ານບົດບາດຍິງ-ຊາຍ ແລະ ບັນທຶກການຕິດຕາມການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ຄວນຈະເປັນເງື່ອນໄຂສໍາລັບຜູ້ທີ່ຖືກແຕ່ງຕັ້ງໃໝ່. ນອກຈາກຄວາມຮູ້ທາງດ້ານກົດໝາຍແລ້ວ, ຄວາມຮູ້ຂອງພວກເຂົາກ່ຽວກັບລະບົບການຈໍາແນກທາງທີ່ມີມາຢ່າງຍາວນານ ກໍເປັນອີກເງື່ອນໄຂໜຶ່ງໃນການປະຕິບັດພັນທະໜ້າທີ່ຂອງຜູ້ພິພາກສາ. ຄວາມຮູ້ ແລະ ປະສົບການໃນການແກ້ໄຂຄວາມບໍ່ສະເໝີພາບ ຄວນເປັນເງື່ອນໄຂສໍາລັບການແຕ່ງຕັ້ງຜູ້ພິພາກສາໃໝ່ທັງໝົດ ແລະ ໃນການຈ້າງງານພະນັກງານຂອງສານ.

### ເງື່ອນໄຂໃນການເຮັດວຽກຂອງຜູ້ພິພາກສາເພດຍິງ

ເມື່ອໄດ້ຮັບການແຕ່ງຕັ້ງແລ້ວ, ຜູ້ພິພາກສາຍັງປະເຊີນກັບການຖືກຈໍາແນກທາງເພດຢູ່ໃນອາຊີບຂອງເຂົາເຈົ້າ. ການມອບໝາຍຂອງສານຕ້ອງປະກອບດ້ວຍຄວາມຍືດຢຸ່ນສໍາລັບຄວາມຮັບຜິດຊອບຂອງຄອບຄົວ, ການຮັບຮູ້ປະສົບການທີ່ແຕກຕ່າງກັນທີ່ແມ່ຍິງພົບພໍ້ມາ, ແລະ ເອົາໃຈໃສ່ຕໍ່ກັບໂອກາດແລະການສົ່ງເສີມຜູ້ພິພາກສາເພດຍິງແລະເພດຊາຍ. ຫົວໜ້າຕຸລາການສາມາດສືບຕໍ່ກວດກາເບິ່ງວ່າໂອກາດໃນການເປັນຜູ້ນໍາຕໍ່ກັບການມອບຫມາຍໜ້າທີ່ໃນຄະດີທີ່ໃຫຍ່, ແລະ ໂອກາດທີ່ຈະເສີມຂະຫຍາຍຄວາມຮູ້ຂອງຜູ້ພິພາກສາເພດຍິງ ແລະ ເພດຊາຍໄດ້ຖືກສະຫນອງໃຫ້ຢ່າງເທົ່າທຽມກັນຫຼືບໍ່.

ການຮັບຟັງສຽງຂອງແມ່ຍິງ, ທັດສະນະກ່ຽວກັບຄະດີ ແລະ ການຕີຄວາມໝາຍທາງດ້ານກົດຫມາຍ ຊ່ວຍໃຫ້ຜູ້ພິພາກສາທັງຫມົດ, ລວມທັງຜູ້ຊາຍ, ມີພື້ນຖານຄວາມຊໍານານທີ່ກວ້າງຂວາງຫຼາຍຂຶ້ນເພື່ອເປັນບ່ອນອີງໃນການຕັດສິນຂອງພວກເຂົາ ເຊິ່ງສິ່ງເຫຼົ່ານີ້ຊ່ວຍສະຫນັບສະຫນູນການພັດທະນາທາງດ້ານວິຊາຊີບແລະ ສົ່ງເສີມທ່າແຮງອັນສູງສຸດໃຫ້ແກ່ຕຸລາການ.

ຜູ້ພິພາກສາເພດຍິງປະສົບກັບການຖືກຈຳແນກທາງເພດໃນອົງ ການຕຸລາການ, ບໍ່ວ່າຈະເປັນຈາກເພື່ອນມິດຂອງພວກເຈົ້າ. ຈາກພະນັກງານຂອງສານ ຫຼື ຈາກທະນາຍຄວາມທີ່ຢູ່ໃນສານ. ການແກ້ໄຂບັນຫາການຈຳແນກທາງເພດນີ້ ຈະເປັນປະໂຫຍດຕໍ່ຕົວຜູ້ພິພາກສາເອງ, ທັງແມ່ຍິງແລະຜູ້ຊາຍ, ລວມທັງລະບົບສານທັງໝົດ.

ຜູ້ພິພາກສາເພດຍິງມັກຈະເຫັນວ່າຕົນເອງຖືກຈຳກັດຕໍ່ການໄຕ່ສວນຄະດີກ່ຽວກັບຄອບຄົວ ຫຼື ເດັກນ້ອຍ. ການມອບໝາຍຄະດີທາງກົດໝາຍທີ່ກ່ຽວກັບຄອບຄົວໃຫ້ແກ່ເພດຍິງ ແມ່ນອີງໃສ່ຄວາມເຊື່ອທີ່ວ່າແມ່ຍິງເປັນເພດທີ່ໃຫ້ການລ້ຽງດູຫຼາຍກວ່າ. ການມອບໝາຍຕຳແໜ່ງສານໂດຍອີງໃສ່ຄວາມເຊື່ອຕໍ່ການຈຳແນກທາງເພດ ໄດ້ຈຳກັດໂອກາດຂອງຜູ້ພິພາກສາເພດຍິງ, ເຊັ່ນດຽວກັນກັບຜູ້ຊາຍ. ປະສົບການຂອງແມ່ຍິງກ່ຽວກັບການຈ້າງງານ ຫຼື ການດຳເນີນທຸລະກິດ ແມ່ນມີຄວາມສຳຄັນຕໍ່ກັບກົດໝາຍແພ່ງທີ່ກ່ຽວຂ້ອງ. ຜູ້ພິພາກສາເພດຍິງຢູ່ໃນສານອາຍາໄດ້ພົບພໍ້ການນິສິນມຸດຖານກ່ຽວກັບການຈຳແນກທາງເພດຂອງຕຳຫຼວດແລະສານໃນການປະຕິບັດງານຂອງພວກເຂົາ, ເຊິ່ງເປັນສິ່ງທີ່ເຮັດໃຫ້ລະບົບກົດຫມາຍມີຄວາມຍຸຕິທຳແລະໂປ່ງໃສ. ເມື່ອຜູ້ພິພາກສາເພດຍິງຖືກມອບໝາຍພຽງແຕ່ຄະດີທີ່ຢູ່ໃນວົງແຄບ, ຄວາມຊຳນານຂອງພວກເຂົາກໍຈະຖືກ ສູນເສຍໄປ.

## ສົ່ງເສີມແມ່ຍິງພາຍໃນຕຸລາການ

ການສົ່ງເສີມຜູ້ພິພາກສາທຸກເພດ ແລະ ສ້າງໂອກາດໃຫ້ແກ່ການເປັນຜູ້ນຳ ແລະ ສາຍຕາຂອງແມ່ຍິງໃນຖານະຜູ້ພິພາກສາສານແມ່ນອີກບາດກ້າວໜຶ່ງທີ່ສຳຄັນເພື່ອຮັກສາຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ຄວາມຊື່ສັດຂອງລະບົບກົດໝາຍ. ບັນດາອົງການຕຸລາການ, ເຊັ່ນກັບບັນດາສະຖາບັນໃຫຍ່, ຕ້ອງກວດກາຢ່າງເປັນປະຈຳກ່ຽວກັບໂອກາດ ແລະ ສິ່ງກີດຂວາງໃນການຊຸກຍູ້. ຜູ້ພິພາກສາສ່ວນບຸກຄົນທີ່ແນະນຳຜູ້ແຕ່ງຕັ້ງໃຫມ່, ຜູ້ພິພາກສາບໍລິຫານທີ່ແຕ່ງຕັ້ງສະມາຊິກຄະນະກຳມະການແລະຜູ້ພິພາກສາອາວຸໂສເຮັດໃຫ້ການມອບຫມາຍຂອງສານທັງຫມົດມີບົດບາດ. ໃນແຕ່ລະໄລຍະທີ່ການຕັດສິນໃຈແມ່ນໄດ້ຖືກດຳເນີນກ່ຽວກັບໂອກາດການເຮັດວຽກຂອງຜູ້ພິພາກສາ, ຜົນກະທົບທາງດ້ານເພດຂອງການຕັດສິນໃຈຕ້ອງໄດ້ຮັບການກວດກາ.

### ມັນສະແດງອອກຄືແນວໃດ?

ຜູ້ພິພາກສາເພດຍິງທີ່ສຶກສາກົດໝາຍພາສີສາກົນ ຖືກມອບໝາຍໃຫ້ທຳໜ້າທີ່ຢູ່ໃນສານຄອບຄົວຢູ່ເຂດຊົນນະບົດ.

ເມື່ອມີການແຕ່ງຕັ້ງຄະນະກຳມະການໃຫມ່, ຜູ້ພິພາກສາທີ່ຢູ່ໃນຕຳແໜ່ງບໍລິຫານ ໄດ້ຖາມເພື່ອນຂອງລາວທີ່ຢາກເຂົ້າຮ່ວມຄະນະກຳມະການ ແທນທີ່ຈະວັດຈາກທັກສະແລະຜົນປະໂຫຍດຂອງຜູ້ພິພາກສາທັງຫມົດຢູ່ໃນຂົງເຂດ.

ຜູ້ພິພາກສາເຊື້ອເຊີນຜູ້ຖືກແຕ່ງຕັ້ງໃຫມ່ເຂົ້າຮ່ວມກອງປະຊຸມແລະ ສະເໜີແນະໃຫ້ພວກເຂົາກ່ຽວກັບສຳນວນໃນການເລື່ອນຕຳແໜ່ງ ໂດຍກ່າວວ່າ, “ລາວຄືກັນກັບຂ້ອຍຕອນທີ່ຂ້ອຍອາຍຸ 15 ປີ.”

## ການປະຕິບັດສຳລັບຕຸລາການ

- ✓ ຍື່ນໂອກາດໃນການພັດທະນາວິຊາຊີບ ແລະ ການຝຶກອົບຮົມໃຫ້ແກ່ຜູ້ພິພາກສາຢ່າງສະເໝີພາບ.
- ✓ ສ້າງຕັ້ງຄະນະກຳມະການພາຍໃນຂອງຜູ້ພິພາກສາເພື່ອກວດກາຄືນກ່ຽວກັບອຸປະສັກດ້ານບົດບາດຍິງຊາຍຕໍ່ຄວາມກ້າວໜ້າໃນໜ້າທີ່ວຽກງານຂອງຕຸລາການ ແລະ ໃຫ້ຄຳແນະນຳສຳລັບການດຳເນີນການຈ້າງງານ ແລະການເລື່ອນຕຳແໜ່ງ
- ✓ ກວດກາຄືນຂະບວນການແຕ່ງຕັ້ງຂອງສານ ເພື່ອກຳນົດ ແລະ ລົບລ້າງການຈຳແນກທາງເພດ.
- ✓ ຕິດຕາມການແຕ່ງຕັ້ງຄະນະກຳມະການ, ກອງປະຊຸມ, ການພັດທະນາວິຊາຊີບແລະໂອກາດອື່ນໆທີ່ກ່ຽວຂ້ອງກັບອາຊີບໂດຍອີງໃສ່ບົດບາດຍິງຊາຍ.
- ✓ ດຳເນີນການແກ້ໄຂອຸປະສັກທາງດ້ານບົດບາດຍິງຊາຍສຳລັບແມ່ຍິງທີ່ຢູ່ໃນຕຳແໜ່ງນຳພາ.

ສະພາຕຸລາການໃຫຍ່ໃນປະເທດສະເປນໄດ້ຮັບຮອງເອົາແຜນການຄວາມສະເຫມີພາບເພື່ອແກ້ໄຂບັນຫາຄວາມລຳອຽງ, ການຈຳແນກ, ການຂົ່ມເຫັງ ແລະ ການປະຕິບັດງານທາງວິຊາຊີບພາຍໃນສານ ເຊິ່ງໄດ້ກຳນົດຫຼາຍສິ່ງດັ່ງນີ້:

- ຮັບປະກັນໂອກາດທີ່ເທົ່າທຽມກັນຂອງແມ່ຍິງ ແລະ ຜູ້ຊາຍໃນການເຂົ້າເຖິງອາຊີບຕຸລາການ
- ຮັບປະກັນການຝຶກອົບຮົມກ່ຽວກັບຄວາມສະ ເໝີພາບໃຫ້ແກ່ຕຸລາການຢ່າງພຽງພໍ, ຕ້ານການໃຊ້ຄວາມຮຸນແຮງທາງເພດແລະການດຳເນີນຄະດີທີ່ມີທັດສະນະການຈຳແນກທາງເພດ.
- ສະໜອງໂອກາດໃນການສົ່ງເສີມວິຊາຊີບໃຫ້ແກ່ແມ່ຍິງ ແລະ ຮັບປະກັນການດຳລົງຕຳແໜ່ງທີ່ມີຄວາມຮັບຜິດຊອບຫຼາຍຂຶ້ນໃຫ້ແກ່ແມ່ຍິງຢູ່
- ພາຍໃນອົງການຕຸລາການ
- ສົ່ງເສີມການມີສ່ວນຮ່ວມຢ່າງສະເໝີພາບຂອງແມ່ຍິງ ແລະ ຜູ້ຊາຍໃນຫຼັກສູດການຝຶກອົບຮົມ, ທັງເປັນວິທະຍາກອນ ແລະ ຜູ້ເຂົ້າຮ່ວມ
- ສົ່ງເສີມບົດບາດຍິງຊາຍໃນການຝຶກອົບຮົມທາງດ້ານຕຸລາການ
- ຊຸກຍູ້ການຮ່ວມມື ແລະ ຄວາມສອດຄ່ອງກັນຂອງຄອບຄົວ, ວຽກງານ ແລະ ຊີວິດສ່ວນຕົວພາຍໃນວິຊາຊີບຂອງຕຸລາການ.
- ການພັດທະນາອະນຸສັນຍາວ່າດ້ວຍການຕ້ານ
- ການກະທຳທີ່ເປັນລ່ວງລະເມີດທຸກຮູບແບບ, ລວມທັງການລ່ວງລະເມີດທາງເພດ
- ການປົກປ້ອງສຸຂະພາບດ້ານອາຊີບຂອງຜູ້ພິພາກສາກ່ອນ ແລະ ຫຼັງເກີດລູກ, ເຊັ່ນດຽວກັນກັບຜູ້ພິພາກສາທີ່ປະສົບກັບຄວາມຮຸນແຮງທາງເພດ ຫຼື ການຂົ່ມເຫັງໃນບ່ອນເຮັດວຽກ. ແກ້ໄຂຊ່ອງວ່າງກ່ຽວກັບຄ່າແຮງງານສຳລັບເພດຍິງແລະຊາຍຢູ່ໃນອົງການຕຸລາການ

Source: UNODC

## ການປະຕິບັດສຳລັບຜູ້ພິພາກສາ

- ✓ ໃຫ້ຄຳແນະນຳສຳລັບຜູ້ພິພາກສາໃໝ່ທີ່ເປັນເພດຍິງ ເພື່ອຊ່ວຍໃຫ້ພວກເຂົາຊອກຫາໂອກາດ ແລະ ສະແດງຄວາມພາວະຄວາມເປັນຜູ້ນຳຂອງຕົນເອງ.
- ✓ ເຊີນຜູ້ພິພາກສາໃໝ່ທີ່ເປັນເພດຍິງເຂົ້າຮ່ວມໃນຫຼັກສູດ ແລະ ກອງປະຊຸມທີ່ຍົກສູງບົດບາດແລະຄວາມຊຳນານຂອງພວກເຂົາ.
- ✓ ເມື່ອມີການຈັດການເວທີສົນທະນາກ່ຽວກັບປະເດັນໃດໜຶ່ງ, ສະເໜີໃຫ້ເອົາຜູ້ພິພາກສາໃໝ່ທີ່ເປັນເພດຍິງເຂົ້າໃນຄະນະທີ່ຮ່ວມສົນທະນາ.

## ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ

- 🕮 ຄວາມຫຼາກຫຼາຍທາງເພດ ແລະ ຄວາມຍຸຕິທຳ: ພາບລວມ ແລະ ຄຳແນະນຳ - ຫ້ອງການ OSCE ສຳລັບສະຖາບັນປະຊາທິປະໄຕ ແລະ ສິດທິມະນຸດ
- 🕮 ບົດລາຍງານພິເສດກ່ຽວກັບຄວາມເປັນເອກະລາດຂອງຜູ້ພິພາກສາ ແລະ ທະນາຍຄວາມ, ສະມັດຊາໃຫຍ່ແຫ່ງອົງການສະຫະປະຊາຊາດ
- 🕮 ບົດບາດຂອງຜູ້ພິພາກສາເພດຍິງ ແລະ ທັດສະນະກ່ຽວກັບບົດບາດຍິງຊາຍໃນການຮັບປະກັນຄວາມເປັນເອກະລາດທາງດ້ານຕຸລາການ ແລະ ຄວາມຊື່ສັດ, ເຄືອຂ່າຍຄວາມສັດຊື່ທາງຕຸລາການໃນທົ່ວໂລກ
- 🕮 ກວດເບິ່ງວ່າໂອກາດໃນການເປັນຜູ້ນຳ, ການມອບຫມາຍຄະດີທີ່ສຳຄັນ, ໂອກາດທີ່ຈະຂະຫຍາຍຄວາມຮູ້ຂອງພວກເຂົາໄດ້ຖືກສະເຫນີໃຫ້ຢ່າງເທົ່າທຽມກັນຫຼືບໍ່

### ສັງລວມບັນຫາໂດຍຫຍໍ້ 6

# ການຂູດຮີດທາງເພດ

## ຄໍານິຍາມ:

ຮູບແບບການຂູດຮີດທາງເພດ ແລະ ການສໍ້ລາດບັງຫຼວງທີ່ເກີດຂຶ້ນໃນເວລາທີ່ຄົນຢູ່ໃນຕໍາແໜ່ງອໍານາດ ...ສະແຫວງຫາການຂູດຮີດຄວາມທາງເພດເພື່ອແລກປ່ຽນກັບບາງສິ່ງບາງຢ່າງພາຍໃຕ້ອໍານາດທີ່ຈະມອບໃຫ້ ຫຼື ກັກໄວ້. ໃນຄວາມເປັນຈິງ, ການຂູດຮີດທາງເພດແມ່ນຮູບແບບຂອງການສໍ້ລາດບັງຫຼວງທີ່ມາໃນຮູບແບບທາງເພດ, ແທນທີ່ຈະເປັນເງິນທີ່ໃຫ້ເປັນສິນບົນ.

Source: IAWJ

## ຄວາມຄິດເຫັນ: ຜົນສະທ້ອນຕໍ່ ຄວາມເປັນເລີດທາງດ້ານຕຸລາການ

ການຂູດຮີດທາງເພດເປັນຮູບແບບໜຶ່ງຂອງການສໍ້ລາດບັງຫຼວງທີ່ບຸກຄົນທີ່ຢູ່ໃນອໍານາດ ສະເໜີຜົນປະໂຫຍດເພື່ອແລກປ່ຽນກັບການຕອບສະໜອງທາງເພດ ເຊິ່ງມັງມີລັກສະນະການເຄື່ອນໄຫວໃນຮູບແບບດຽວກັນ ທັງອໍານາດແລະ ການຂູດຮີດໂດຍໃຊ້ຕໍາແໜ່ງເປັນການສໍ້ລາດບັງຫຼວງທາງການເງິນ, ແຕ່ເພີ່ມລັກສະນະທາງດ້ານບົດບາດຍິງຊາຍຕື່ມອີກ, ເຖິງແມ່ນວ່າຈະບໍ່ແມ່ນສະເພາະແຕ່ແມ່ຍິງທີ່ເປັນເປົ້າໝາຍ. ສະມາຄົມຜູ້ພິພາກສາເພດຍິງສາກົນ (IAWJ) ໄດ້ກໍານົດນິຍາມຄໍາວ່າ ການຂູດຮີດທາງເພດ ແລະ ໄດ້ເຄື່ອນໄຫວເພື່ອປູກຈິດສໍານຶກກ່ຽວກັບບັນຫາດັ່ງກ່າວຢູ່ພາຍໃນອົງການຕຸລາການ ແລະ ໃນການປັກສາຫາລືລະຫວ່າງປະເທດກ່ຽວກັບຄວາມເປັນເລີດທາງດ້ານຕຸລາການ.[13] ອົງການ IAWJ ໄດ້ກໍານົດສາມອົງປະກອບທີ່ສໍາຄັນຂອງການຂູດຮີດທາງເພດ: ບຸກຄົນທີ່ໄດ້ຮັບມອບຫມາຍໃຫ້ມີອໍານາດທີ່ສວຍໃຊ້ອໍານາດນັ້ນ

- ເພື່ອແລກປ່ຽນກັບຄວາມປາດຖະໜາທາງເພດ ແລະ
- ອີງໃສ່ການບີບບັງຄັບທາງສິດອໍານາດຫຼາຍກວ່າຄວາມຮຸນແຮງທາງຮ່າງກາຍ ຫຼື ການບັງຄັບເພື່ອໃຫ້ໄດ້ຄວາມປາດຖະໜາທາງເພດ.

ຄວາມປາດຖະໜາທາງເພດຖືກເຂົ້າໃຈວ່າເປັນກິດຈະກໍາທາງເພດໃດໆກໍຕາມທີ່ກ່ຽວກັບການສໍາຜັດທີ່ບໍ່ເຫມາະສົມ, ການເປີດເຜີຍສ່ວນຕ່າງໆຂອງຮ່າງກາຍ, ຫຼື ການຖ່າຍຮູບທາງເພດ.

ການຂູດຮີດທາງເພດແມ່ນຮູບແບບຂອງການສໍ້ລາດບັງຫຼວງທີ່ມີຜົນກະທົບທີ່ບໍ່ສົມດຸນກັນຂອງແມ່ຍິງ. ໂດຍທົ່ວໄປແລ້ວແມ່ຍິງແມ່ນເປັນເປົ້າ ໝາຍໃນການລ່ວງລະເມີດຜ່ານສິດອໍານາດນີ້. ຄວາມຈິງທີ່ວ່າການຂູດຮີດທາງເພດບໍ່ໄດ້ຖືກລາຍງານ ຫຼື ຕິດຕາມກວດກາໃນອາດີດໄດ້ ເຮັດໃຫ້ຄວາມສ່ຽງໂດຍສະເພາະກັບແມ່ຍິງແມ່ນບໍ່ສາມາດເບິ່ງເຫັນ. ການຮັບຮູ້ການລ່ວງລະເມີດຜ່ານສິດອໍານາດນີ້ ແລະ ການໃຫ້ຄວາມຮູ້ແກ່ຜູ້ພິພາກສາກ່ຽວກັບການຂະຫຍາຍຕົວຂອງມັນ ແມ່ນບາດກ້າວທໍາອິດເພື່ອຕ້ານການລ່ວງລະເມີດທາງເພດ. ຜູ້ພິພາກສາ, ໄອຍະການ ແລະ ຕໍາຫຼວດຕ້ອງນໍາໃຊ້ກົດໝາຍຕ້ານການສໍ້ລາດບັງຫຼວງໃນຄະດີທີ່ມີການຂູດຮີດທາງເພດເພື່ອສື່ ສານໃຫ້ສັງຄົມຮູ້ວ່າການສໍ້ລາດບັງຫຼວງຮູບແບບນີ້ມີຄວາມຮ້າຍແຮງ ແລະ ບໍ່ສາມາດຍອມຮັບໄດ້.

ເນື່ອງຈາກມັນມີລັກສະນະທີ່ລະອຽດອ່ອນ ແລະ ເປັນເລື່ອງທີ່ໜ້າອັບອາຍໃນການລາຍງານການຂູດຮີດທາງເພດ, ຜູ້ພິພາກສາ ແລະ ເຈົ້າໜ້າທີ່ສານຕ້ອງໄດ້ເອົາໃຈໃສ່ເປັນພິເສດຕໍ່ຄວາມລະອຽດອ່ອນນີ້ ແລະ ຄວາມສ່ຽງທີ່ແມ່ຍິງປະເຊີນ. ການຮັບປະກັນການເຂົ້າເຖິງພະນັກງານທີ່ໄດ້ຮັບການຝຶກອົບຮົມທີ່ດີ ແລະ ການມີສິດທິໃນຂະບວນການການຮ້ອງຮຽນຈະເຮັດໃຫ້ປະຊາຊົນສາມາດລາຍງານການຂູດຮີດທາງເພດໄດ້ງ່າຍຂຶ້ນ. ເຊັ່ນດຽວກັນກັບກໍລະນີຂອງການຂົ່ມເຫັງທາງເພດແລະການລວນລາມທາງເພດ, ສານຕ້ອງຮັບຮູ້ກ່ຽວກັບຄວາມເຊື່ອຕ່າງໆເຫຼົ່ານີ້ແລະຮັບປະກັນວ່າຈະປ້ອງກັນການມີສົມມຸດຖານ ຫຼື ຄວາມເຊື່ອແບບຜິດໆດັ່ງກ່າວໃນການມີອິດທິພົນຕໍ່ການປະເມີນຂອງຕົນເອງຕໍ່ກັບຜູ້ຖືກເຄາະຮ້າຍທາງເພດ, ເຊັ່ນດຽວກັນກັບການປະພຶດຂອງຜູ້ສອບສວນ, ຕໍາຫຼວດ, ແລະ ພະນັກງານສານ.

13 Fighting Sextortion Toolkit, IAWJ.

ຜູ້ພິພາກສາ, ໃນຖານະທີ່ເປັນເຈົ້າໜ້າທີ່ຂອງສາທາລະນະຊົນທີ່ມີໜ້າທີ່ປົກປ້ອງສິດທິຂອງຜູ້ທີ່ມີຄວາມບອບບາງທີ່ສຸດ, ມີບົດ ບາດນໍາພາໃນການປ່ຽນແປງຄວາມຮັບຮູ້ກ່ຽວກັບການຂູດຮີດທາງເພດ.

ໃນປີ 2020, ອົງການຄວາມໂປ່ງໃສສາກົນ ໄດ້ເພີ່ມຄໍາຖາມກ່ຽວກັບການຂູດຮີດທາງເພດຢູ່ໃນການສໍາຫຼວດປະຈໍາປີຂອງຕົນກ່ຽວກັບຄວາມຮັບຮູ້ຂອງປະຊາຊົນຕໍ່ກັບການສໍ້ລາດບັງຫຼວງ ເຊິ່ງເປັນປີທໍາອິດທີ່ມີຂໍ້ມູນກ່ຽວກັບອັດຕາສ່ວນຂອງຜູ້ທີ່ມີບຸກຄົນຢູ່ໃນຕໍາແໜ່ງ ສະເໜີຜົນປະໂຫຍດໃຫ້ຢ່າງໂຈ່ງແຈ້ງເພື່ອແລກປ່ຽນກັບຄວາມປາຖະໜາທາງເພດຂອງພວກເຂົາ. ໃນນີ້ພົບວ່າການຂູດຮີດທາງເພດແມ່ນມີຢູ່ທົ່ວພາກພື້ນອາຊຽນ.

## ການຂູດຮີດທາງເພດພາຍໃນສານ

ການຂູດຮີດທາງເພດສາມາດເຫັນໄດ້ຢ່າງຊັດເຈນໃນຫຼາຍຂະແໜງ ການ ແລະ ການບໍລິການ ເຊິ່ງເປັນບັນຫາພາຍໃນການບໍລິຫານຈັດການຂອງສານ. ບໍ່ພຽງແຕ່ຜູ້ພິພາກສາທີ່ຄວນລະມັດລະວັງກ່ຽວກັບການຂູດຮີດທາງເພດໃນເວລາທີ່ມີການລາຍງານແລະການໂຕ້ຖຽງຢູ່ໃນສານ, ແຕ່ພວກເຂົາຍັງຕ້ອງໄດ້ຮັບຮູ້ຢູ່ພາຍໃນການດໍາເນີນງານຂອງສານ.

ຄະດີທີ່ກ່ຽວກັບການຂູດຮີດທາງເພດໃນທົ່ວໂລກ ແມ່ນກ່ຽວຂ້ອງກັບຄວາມກົດດັນພະຍານ, ຜູ້ດໍາເນີນຄະດີ, ພະນັກງານສານ ແລະທະນາຍ ຄວາມເພື່ອໃຫ້ບັນລຸຄວາມປາຖະໜາທາງເພດເພື່ອເປັນການແລກປ່ຽນກັບຂະບວນການຂອງສານທີ່ໄວຂຶ້ນ,ໂອກາດສໍາລັບອຽກເຮັດງານທໍາ, ຄ່າທໍານຽມຕໍ່າ, ການຕັດສິນຄືນອົບພະຍົບ ແລະການຕັດສິນໂທດທີ່ເບົາລົງ.[14]

ຜູ້ພິພາກສາ ສາມາດເປັນຜູ້ນໍາພາໃນການພັດທະນາການລາຍງານ, ການຮ້ອງທຸກ ແລະ ຂັ້ນຕອນການສືບສວນເພື່ອຮັບປະກັນວ່າມີກົນໄກທີ່ປອດໄພ,ເຊື່ອຖືໄດ້ພາຍໃນການບໍລິຫານຂອງສານເພື່ອແກ້ໄຂບັນຫາການຂູດຮີດທາງເພດ.

ຜູ້ພິພາກສາມັກຈະເປັນພຽງຜູ້ດຽວໃນຕໍາແໜ່ງທີ່ຈະຊີ້ໃຫ້ເຫັນການກະທໍາຜິດຂອງເພື່ອນຮ່ວມງານຂອງພວກເຂົາ.ຄວາມບໍ່ສົມດຸນທາງອໍານາດລະຫວ່າງຜູ້ພິພາກສາ ແລະ ພະນັກງານ, ພະຍານ ຫຼື ຜູ້ດໍາເນີນຄະດີ ເຮັດໃຫ້ເປັນໄປໄດ້ຍາກຫຼາຍທີ່ຈະມີການລາຍງານກ່ຽວກັບພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ. ມິດສະຫາຍທີ່ມີອໍານາດເທົ່າທຽມກັນ ແລະ ມີຄວາມໜ້າເຊື່ອຖືທາງດ້ານວິຊາຊີບ ເຊິ່ງມີໂອກາດຫຼາຍກວ່າທີ່ຈະມີການດໍາເນີນການເພື່ອຢຸດຕິການລ່ວງລະເມີດອໍານາດນີ້

14 https://www.unodc.org/documents/ji/knowledge_products/Gender_Paper_FINAL_DOHA.pdf Pgs. 15 - 18

**ຮູບທີ 4: ອັດຕາການລ່ວງລະເມີດທາງເພດແຍກຕາມປະເທດ**




Source: Transparency International. Global Corruption Barometer: Asia 2020. page 26.

### ມັນສະແດງອອກຄືແນວໃດ?

ແມ່ຍິງຄົນໜຶ່ງພະຍາຍາມລົງທະບຽນການບໍລິການສຸຂະພາບໃຫ້ກັບລູກຂອງລາວ.ເຈົ້າຫນ້າທີ່ເວົ້າວ່າລາວບໍ່ມີເວລາ, ແຕ່ຖ້າຜູ້ຍິງຄົນດັ່ງກ່າວໄປກິນເຂົ້າແລງນໍາລາວ, ລາວກໍ່ຈະເຮັດໃຫ້ພາຍຫຼັງ.

ແມ່ຍິງຄົນໜຶ່ງຂໍໃຫ້ທະນາຍຄວາມເປັນຕົວແທນລູກຊາຍຂອງລາວທີ່ຖືກຈັບ, ເຖິງແມ່ນວ່າພວກເຂົາບໍ່ມີເງິນຫຼາຍ.ທະນາຍຄວາມໄດ້ສໍາຜັດກັບລາວ ແລະ ບອກລາວວ່າ
ພວກເຂົາຈະປະຕິບັດ 'ແຜນການຊໍາລະເງິນ'.

ພະນັກງານຄົນໃໝ່ຢູ່ສານຂໍເຂົ້າຮ່ວມກອງປະຊຸມຝຶກອົບຮົມ. ຜູ້ພິພາກສາທີ່ລາວເຮັດວຽກນໍາ ມັກຈະໃຫ້ແນ່ໃຈວ່າພວກເຂົາຢູ່ໃນຫ້ອງການຫ້ອງການພຽງລໍາພັງ. ລາວພະຍາຍາມຈູບພະນັກງານຍິງຄົນນັ້ນ ແລະ ເມື່ອນາງຄັດຄ້ານ, ລາວປະຕິເສດການຮ້ອງຂໍຝຶກອົບຮົມຂອງນາງ.

## ການປະຕິບັດສໍາລັບຕຸລາການ

- ✓ ອອກຄໍາແນະນໍາທີ່ຊັດເຈນທີ່ກໍານົດແລະຕັດສິນລົງໂທດ ການຂູດຮີດທາງເພດ.
- ✓ ຈັດການຝຶກອົບຮົມໃຫ້ແກ່ຜູ້ພິພາກສາກ່ຽວກັບຮູບແບບທີ່ເຫັນໄດ້ຊັດເຈນໃນຄະດີການຂູດຮີດທາງເພດ, ໃຫ້ຄວາມຮູ້ກັບຜູ້ພິພາກສາເພື່ອສັງເກດນຍານຂອງການຂູດຮີດທາງເພດຢູ່ໃນຄວາມເປັນຈິງຂອງຄະດີ ຫຼື ຈາກພຶດຕິກໍາຂອງພະຍານ. ນໍາສະເໜີແນວຄວາມຄິດໃນການໄຕ່ຖາມດ້ອຍຄວາມເຄົາລົບກ່ຽວກັບການຂູດຮີດທາງເພດ.
- ✓ ສ້າງກົນໄກການຮ້ອງຮຽນທີ່ອະນຸຍາດໃຫ້ມີການລາຍງານຢ່າງປອດໄພ, ເປັນຄວາມລັບກ່ຽວກັບການຂູດຮີດທາງເພດທີ່ມີຜົນບັງຄັບໃຊ້.
- ✓ ສະໜັບສະໜູນການປະຕິຮູບກົດໝາຍທີ່ຈະລວມເອົາການຂູດຮີດທາງເພດເພື່ອເປັນການອ້າງອີງຢ່າງຊັດເຈນໃນຂໍ້ກໍານົດຕ້ານການສໍ້ລາດບັງຫຼວງ.
- ✓ ສົ່ງເສີມແລະສະຫນັບສະຫນູນການສຶກສາອົບຮົມໃຫ້ແກ່ສາທາລະນະຊົນກ່ຽວກັບການຂູດຮີດທາງເພດວ່າເປັນອາຊະຍາກໍາທີ່ຈະຖືກດໍາເນີນການຢ່າງຈິງຈັງໂດຍລະບົບສານ.

## ການປະຕິບັດສໍາລັບຜູ້ພິພາກສາ

- ✓ ການຕັດສິນໂທດ ແລະ ລົງໂທດໃນຄະດີການຂູດຮີດທາງເພດ ໂດຍໃຊ້ກົດໝາຍ ແລະ ໂທດກ່ຽວກັນກັບຄະດີການໃຫ້ສິນບົນ ແລະ ການສໍ້ລາດບັງຫຼວງທາງດ້ານການເງິນ.
- ✓ ເອົາໃຈໃສ່ຂະບວນການລະຫວ່າງຜູ້ພິພາກສາ, ທະນາຍຄວາມແລະເຈົ້າຫນ້າທີ່ອາວຸໂສຂອງສານ ແລະແມ່ຍິງທີ່ເຮັດວຽກຢູ່ໃນສານ ຫຼື ເຂົ້າຮ່ວມໃນສານ, ບອກໃຫ້ຮູ້ສັນຍານຂອງການຂູດຮີດທາງເພດ.
- ✓ ທີ່ປະຕິບັດຕໍ່ພະນັກງານໜຸ່ມໃນລັກສະນະທາງເພດ.

## ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ

- 🕮 Fighting Sextortion Toolkit, IAWJ
- 🕮 Sextortion: A Crime of Corruption and Sexual Exploitation, International Bar Association
- 🕮 Breaking the Silence Around Sextortion: The Links Between Power, Sex and Corruption, Transparency International

ສັງລວມບັນຫາໂດຍຫຍໍ້ 7

# ການລ່ວງລະເມີດທາງເພດ ແລະ ການປະພຶດຜິດທາງເພດ

## ຄຳນິຍາມ:

**ການລ່ວງລະເມີດທາງເພດ**ແມ່ນການກ້າວລ່ວງທາງເພດໂດຍບໍ່ເຕັມໃຈ, ຮຽກຮ້ອງຄວາມປາຖະໜາທາງເພດ, ການປະພຶດທາງວາຈາ ຫຼື ທາງດ້ານຮ່າງກາຍ ຫຼື ທ່າທາງຂອງລັກສະນະທາງເພດ, ຫຼື ພຶດຕິກຳອື່ນໆທີ່ມີລັກສະນະທາງເພດທີ່ອາດຈະຖືກຄາດການໄວ້ ຫຼື ຖືກຮັບຮູ້ຢ່າງສົມເຫດສົມຜົນ ທີ່ເຮັດໃຫ້ເກີດການກະທຳຜິດ ຫຼື ຄວາມອັບອາຍຕໍ່ຜູ້ອື່ນ. ເມື່ອເປັນດັ່ງນັ້ນ ການປະພຶດດັ່ງກ່າວເປັນການຂັດຂວາງການດຳເນີນວຽກງານ,ສ້າງການຈ້າງງານທີ່ມີເງື່ອນໄຂ, ຫຼື ສ້າງສະພາບແວດລ້ອມການເຮັດວຽກທີ່ມີລັກສະນະຂົ່ມຂູ່,ໂຫດຮ້າຍ ຫຼື ກະທຳຜິດ.ໃນຂະນະທີ່ກ່ຽວຂ້ອງກັບຮູບແບບຂອງພຶດຕິກຳ, ມັນສາມາດເປັນຮູບແບບຂອງເຫດການດຽວໄດ້ເຊັ່ນກັນ. ການລ່ວງລະເມີດທາງເພດອາດຈະເກີດຂຶ້ນລະຫວ່າງບຸກຄົນທີ່ມີເພດກົງກັນຂ້າມ ຫຼື ເພດດຽວກັນ ເຊິ່ງໝາຍຄວາມວ່າທັງຊາຍ ແລະ ຍິງສາມາດເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ກະທຳຜິດໄດ້.

Source: UN WOMEN

**ການຂູດຮີດທາງເພດ**ໝາຍເຖິງການລ່ວງລະເມີດຕົວຈິງ ຫຼື ຄວາມພະຍາຍາມໃນການລ່ວງລະເມີດໂດຍການໃຊ້ຕຳແໜ່ງທີ່ມີຄວາມບອບບາງ, ອຳນາດທີ່ແຕກຕ່າງກັນ, ຫຼື ຄວາມໄວ້ເນື້ອເຊື່ອໃຈ ເພື່ອຈຸດປະສົງທາງເພດ ເຊິ່ງລວມທັງການຫາຜົນປະໂຫຍດທາງການເງິນ, ສັງຄົມ ຫຼື ການເມືອງ ຈາກການຂູດຮີດທາງເພດຄົນອື່ນ.

**ການລ່ວງລະເມີດທາງເພດ** ໝາຍເຖິງການລ່ວງລະເມີດທາງຮ່າງກາຍຕົວຈິງ ຫຼື ຖືກຂົ່ມຂູ່ໃນລັກສະນະທາງເພດ, ບໍ່ວ່າຈະເປັນການບັງຄັບ ຫຼືພາຍໃຕ້ເງື່ອນໄຂທີ່ບໍ່ສະເໝີພາບ ຫຼື ບີບບັງຄັບ.

Source: UN Secretary General

## ຄວາມຄິດເຫັນ: ຜົນສະທ້ອນຕໍ່ ຄວາມເປັນເລີດທາງດ້ານຕຸລາການ

### ການລ່ວງລະເມີດທາງເພດ

ສານຕ້ອງມີຄວາມລະວັງກ່ຽວກັບການລ່ວງລະເມີດທາງເພດພາຍໃນຄະນະຕຸລາການ ຫຼື ພະນັກງານຂອງສານ, ເຊັ່ນດຽວກັນກັບຄະດີທີ່ມີການໂຕ້ຖຽງກັນຢູ່ໃນຫ້ອງໄຕ່ສວນ. ຂັ້ນຕອນການລາຍງານທີ່ຊັດເຈນ ແລະ ຂະບວນການຮ້ອງຮຽນທີ່ເຊື່ອຖືໄດ້ ເປັນອົງປະກອບຫຼັກຂອງການສ້າງວັດທະນະທຳພາຍໃນທີ່ບໍ່ໃຫ້ມີການຈຳແນກທາງເພດ ແລະ ການເລືອກປະຕິບັດ.

ຄະດີຕ່າງໆຈາກຄະນະຕຸລາການໃນທຸກຂົງເຂດທົ່ວໂລກ ແລະ ສານທຸກລະດັບ ສະແດງໃຫ້ເຫັນວ່າຜູ້ພິພາກສາ ແລະ ພະນັກງານຂອງສານມີຄວາມສ່ຽງຕໍ່ການຖືກລວນລາມທາງເພດຈາກຜູ້ທີ່ໃຊ້ຕຳແໜ່ງອຳນາດຂອງຕົນເພື່ອຂົ່ມຂູ່ພວກເຂົາໃຫ້ປະຕິບັດຕາມຫຼືຂູ່ໃຫ້ຢ້ານກົວເພື່ອບໍ່ໃຫ້ລາຍງານ.[15]

15 Simbajon v. Esteban, 312 SCRA 192 (1999) (the Philippines). Tan v. Pacuribot, (A.M. No. RTJ-06-1882, Dec. 14, 2007) (the Philippines). Talens-Dabon v. Arceo, 259 SCRA 354 (1996) (the Philippines)

ບໍ່ວ່າການລ່ວງລະເມີດທາງເພດຈະເປັນເຫດການຂອງການສໍາຜັດ ຫຼື ການສະແດງຄວາມຄິດເຫັນທີ່ບໍ່ເໝາະສົມພຽງຄັ້ງດຽວ ຫຼື ເປັນຄວາມກົດດັນທີ່ບໍ່ຕ້ອງການເປັນເວລາທີ່ຍາວນານກໍ່ຕາມ, ເຫດການຕ່າງໆເຫຼົ່ານີ້ລ້ວນເປັນການກະທາງທາງເພດໃນສະຖານທີ່ເຮັດວຽກ ແລະ ເຮັດໃຫ້ຜູ້ຍິງເກີດຄວາມຢ້ານກົວຕໍ່ຄວາມປອດໄພ ຫຼື ຄວາມໝັ້ນຄົງໃນວຽກຂອງເຂົາເຈົ້າ. ນອກນັ້ນ ມັນຍັງເປັນການສື່ໃຫ້ຮູ້ວ່າແມ່ຍິງບໍ່ມີຄຸນຄ່າທີ່ເທົ່າທຽມກັນໃນການເຮັດວຽກ..

ການລ່ວງລະເມີດທາງເພດລວມມີການສະແດງຄວາມຄິດເຫັນໂດຍກົງ,ການຍື່ນສະເໜີ ຫຼື ການຂົ່ມຂູ່ຕໍ່ແມ່ຍິງ,ເຊັ່ນດຽວກັນກັບຄໍາຄິດເຫັນທີ່ມີລັກສະນະຕົລວມ, ເປັນເລື່ອງຕະຫຼົກ, ຮູບພາບຕ່າງໆທີ່ແຊຮ໌ກັນໃນສະພາບແວດລ້ອມຂອງບ່ອນເຮັດວຽກ. ຄໍາຄິດເຫັນ, ຮູບພາບ ແລະເລື່ອງຕະຫລົກຕ່າງໆເຫຼົ່ານັ້ນເຮັດໃຫ້ບ່ອນເຮັດວຽກບໍ່ເປັນມິດແກ່ແມ່ ຍິງທຸກຄົນທີ່ເຮັດວຽກຢູ່ທີ່ນັ້ນ. ນັກນັ້ນຍັງສົ່ງຜົນກະທົບຕໍ່ຜູ້ຊາຍທີ່ເຮັດວຽກຢູ່ໃນສານ, ສ້າງສະພາບແວດລ້ອມທາງເພດທີ່ພວກເຂົາຮູ້ສຶກອຶດອັດ ຫຼື ຊ່ວຍປົກປ້ອງເພື່ອນຮ່ວມງານຈາກການຖືກຂົ່ມເຫັງດັ່ງກ່າວ. ທຸກຄົນຈະໄດ້ຮັບຜົນປະໂຫຍດກໍ່ຕໍ່ເມື່ອບ່ອນເຮັດວຽກບໍ່ມີການປະພຶດທາງເພດທີ່ບໍ່ເໝາະສົມ.

ການສື່ສານທີ່ຊັດເຈນກ່ຽວກັບພຶດຕິກໍາທີ່ຄາດຫວັງໄວ້ ແລະ ຜົນສະທ້ອນສໍາລັບການປະພຶດທີ່ບໍ່ເຫມາະສົມຄວນຈະຖືກມີໃຫ້ກັບພະນັກງານທັງຫມົດ, ລວມທັງຜູ້ພິພາກສາທັງຫມົດ. ສິ່ງນີ້ຕ້ອງປະ ກອບດ້ວຍຂະບວນການຮ້ອງຮຽນທີ່ໂປ່ງໃສທີ່ຊຸກຍູ້ໃຫ້ປະຊາຊົນລາຍງານການລ່ວງລະເມີດທາງເພດດ້ວຍຄວາມເຊື່ອໝັ້ນວ່າບັນຫາດັ່ງກ່າວ ຈະຖືກຈັດການຢ່າງເໝາະສົມ, ເກັບຮັກສາເປັນຄວາມລັບທີ່ສຸດ. ການສືບສວນຈະຕ້ອງດໍາເນີນໄປຢ່າງວ່ອງໄວ, ບໍ່ວ່າຜູ້ກະທໍາຜິດຈະມີຄາມອາວຸໂສພຽງໃດກໍ່ຕາມ. ໃນຂະນະທີ່ການຮັກສາຄວາມລັບໃນຂະບວນການດັ່ງກ່າວເປັນສິ່ງຄວາມສໍາຄັນ, ແຕ່ຜົນຂອງຄະດີກໍບໍ່ຈໍາເປັນຕ້ອງປິດລັບ.

ສິ່ງທີ່ສໍາຄັນສໍາລັບຜູ້ພິພາກສາແລະພະນັກງານສານຄືການເຫັນວ່າອົງການຕຸລາການພິຈາລະນາບັນຫາເຫຼົ່ານີ້ຢ່າງຈິງຈັງ ແລະ ມີຜົນສະທ້ອນທີ່ຮ້າຍແຮງຕໍ່ການລ່ວງລະເມີດສິດທິດັ່ງກ່າວ. ໃນທົ່ວສັງ ຄົມ, ພະນັກງານຈະຕິດຕາມເບິ່ງການບໍລິຫານເພື່ອວ່າເປັນໄປຕາມນະໂຍບາຍທີ່ກໍານົດໄວ້ຫຼືບໍ່, ປະຕິບັດຕໍ່ທຸກຄົນ ຫຼືແມ່ນແຕ່ຜູ້ມີອໍານາດໃຫ້ຢູ່ໃນຂະບວນການທາງກົດໝາຍຄືກັນ.

## ການປະພຶດທີ່ຢູ່ນອກສານ

ການກວດກາການປະພຶດຜິດທາງເພດຂອງຜູ້ພິພາກສາ ແລະ ພຶດຕິກໍາທີ່ເປັນການຈໍາແນກຢູ່ນອກຫ້ອງໄຕ່ສວນຍັງທໍາລາຍຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ລະບົບກົດ ໝາຍ ແລະ ຄວາມສາມາດສະເພາະດ້ານຂອງຜູ້ພິພາກສາໃນການຕັດສິນທີ່ບໍ່ມີອັກຄະຕິ.

## ມັນສະແດງອອກຄືແນວໃດ?

ພະນັກງານອາວຸໂສຄົນໜຶ່ງຈ້າງແຕ່ຜູ້ຍິງໜຸ່ມເທົ່ານັ້ນ ແລະ ແນະນໍາໃຫ້ວ່າລາວຄວນນຸ່ງກະໂປ່ງມາເຮັດວຽກ. ຜູ້ພິພາກສາທ່ານໜຶ່ງເວົ້າເລື່ອງຕະຫລົກທີ່ເປັນການຈໍາ ແນກທາງເພດແລະເວົ້າກ່ຽວກັບຜູ້ພິພາກສາຍິງພຽງຄົນດຽວຢູ່ໃນຫ້ອງການ.

ທະນາຍຄວາມທ່ານໜຶ່ງໄດ້ສໍາຜັດຫຼັງ ຫຼືແຂນຂອງຜູ້ຍິງຢູ່ໃນຫ້ອງໄຕ່ສວນຊໍ້າແລ້ວຊໍ້າອີກ ໂດຍໃຫ້ວິພາກວິ ຈານກ່ຽວກັບຮູບຮ່າງລັກສະນະຂອງເຂົາເຈົ້າ.

ການປະພຶດຂອງຜູ້ພິພາກສາທີ່ຢູ່ນອກບັນລັງ ກໍຄວນໄດ້ຮັບການກວດສອບ ແລະ ການປະພຶດທາງສັງຄົມທີ່ບໍ່ເຫມາະສົມ, ອີເມວຫຼື ປະຫວັດສ່ວນຕົວສາມາດທໍາລາຍຄວາມເຊື່ອຫມັ້ນຂອງສາ ທາລະນະຊົນຕໍ່ຄວາມຊື່ສັດທ່ຽງທໍາສ່ວນບຸກຄົນແລະວິຊາຊີບຂອງຜູ້ພິພາກສາ.

Source: UNODC, Gender-Related Issues in the Judiciary, Global Judicial Integrity Network, Pg. 12

## ການປະຕິບັດສໍາລັບຕຸລາການ

- ✓ ກໍານົດຄໍາແນະນໍາທີ່ຊັດເຈນກ່ຽວກັບການຕັດສິນລົງໂທດຂອງສານກ່ຽວກັບການລ່ວງລະເມີດທາງເພດແລະການປະພຶດທີ່ບໍ່ຖືກຕ້ອງ. ຈັດການຝຶກອົບຮົມແບບບັງຄັບສໍາລັບພະນັກງານທຸກຄົນ, ລວມທັງຜູ້ພິພາກສາກ່ຽວກັບພຶດຕິກໍາທີ່ເຫມາະສົມໃນບ່ອນເຮັດວຽກ..
- ✓ ສ້າງກົນໄກການຮ້ອງຮຽນທີ່ອະນຸຍາດໃຫ້ມີການລາຍງານຢ່າງປອດໄພ, ເປັນຄວາມລັບກ່ຽວກັບການລ່ວງລະເມີດທາງເພດໂດຍບັງຄັບໃຊ້ການປົກປ້ອງຈາກການແກ້ແຄ້ນຄືນ.
- ✓ ສືບສວນແລະດໍາເນີນການກ່ຽວກັບຄະດີການລ່ວງລະເມີດທາງເພດຢູ່ໃນສານ, ໂດຍບໍ່ສົນເລື່ອງຂອງສະຖານະພາບຂອງຜູ້ກະທໍາຜິດ
- ✓ ທົບທວນຄືນຮູບແບບການລ່ວງລະເມີດທາງເພດ ຫຼື ການປະພຶດທີ່ຜິດໃນແຕ່ລະປີ ແລະ ທົບທວນການຝຶກອົບຮົມ ແລະ ການສື່ສານສືບຕໍ່ປ່ຽນແປງວັດ ທະນະທໍາເພື່ອລົບລ້າງການລ່ວງລະເມີດທາງເພດ.

## ການປະຕິບັດສໍາລັບຜູ້ພິພາກສາ

- ✓ ດໍາເນີນການກັບເພື່ອນຮ່ວມງານທີ່ໃຊ້ສັບພາສາໃນການຈໍາ ແນກທາງເພດຕໍ່ກັບພະນັກງານໜຸ່ມນ້ອຍ, ພະຍານ, ຫຼື ຜູ້ດໍາເນີນຄະດີ.
- ✓ ສະໜັບສະໜູນພະນັກງານຫຼືຜູ້ພິພາກສາທີ່ຕ້ອງການໃຊ້ຂະບວນການຮ້ອງຮຽນເພື່ອລາຍງານກ່ຽວກັບການລາວງລະເມີດທາງເພດຫຼືການປະພຶດທີ່ບໍ່ຖືກຕ້ອງ
- ✓ ດໍາເນີນການແຊກແຊງໃນເວລາທີ່ເພື່ອຮ່ວມງານຜູ້ທີ່ຄຽດແຄ້ນ ຫຼື ແກ້ແຄ້ນຕໍ່ການຮ້ອງຮຽນກ່ຽວກັບການລ່ວງລະເມີດທາງເພດ.
- ✓ ດໍາເນີນການໃນຖານະທີ່ເປັນຜູ້ຢູ່ໃນເຫດການ, ໃນເວລາທີ່ທ່ານສັງເກດເຫັນເຫດການການລ່ວງລະເມີດທາງເພດຫຼືການປະພຶດຜິດ, ໂດຍການຄວາມສໍາຄັນກັບຄວາມປອດໄພຂອງຜູ້ຖືກຂົ່ມເຫັງກ່ອນ.

## ແຫຼ່ງຂໍ້ມູນທີ່ເປັນປະໂຫຍດ

- 🕮 Harassment rife in chambers and courts, barristers' group says – The Guardian
- 🕮 Us Too? Bullying and Sexual Harassment in the Legal Profession - International Bar Association (IBA)
- 🕮 The Judiciary Is Not Immune from Bullying and Sexual Harassment - Global Judiciary Integrity Network

# ເອກະສານຊ້ອນທ້າຍ

ເຄືອຂ່າຍຄວາມສັດຊື່ທ່ຽງທຳດ້ານຕຸລາການໂລກ ໄດ້ປຶກສາຫາລືຫຼາຍຄຳແນະນຳໃນຖະແຫຼງການ Doha ທີ່ວ່າຜູ້ພິພາກສາ, ສານ, ລັດ ແລະ ອົງການຈັດຕັ້ງສາກົນ ສາມາດດຳເນີການເພື່ອຕອບສະໜອງບັນຫາດ້ານບົດບາດຍິງຊາຍໃນອົງການການຕຸລາການ ເຊິ່ງປະ ກອບມີສາມປະເພດຂອງຄຳແນະນຳ:

## ຄຳແນະນຳທີ່ຊັດເຈນ ແລະ ຮອບດ້ານກ່ຽວກັບບັນຫາຄວາມສັດຊື່ທ່ຽງທຳທີ່ກ່ຽວຂ້ອງກັບບົດບາດຍິງຊາຍ

- ເຊື່ອມສານບົດບັນຍັດສະເພາະດ້ານບົດບາດຍິງຊາຍເຂົ້າໃນກົດຈັນຍາບັນ
- ສ້າງຄວາມເຂັ້ມແຂງໃຫ້ແກ່ຫລັກການການປະພຶດສຳລັບຕຸລາການຂອງ Bangalore ເພື່ອໃຫ້ຄຳແນະນຳທີ່ຊັດເຈນຫຼາຍຂຶ້ນກ່ຽວກັບບັນຫາຄວາມຊື່ສັດທ່ຽງທຳຂອງຕຸລາການທີ່ກ່ຽວຂ້ອງກັບບົດບາດຍິງຊາຍ
- ຮັບຮອງເອົາຫຼັກຈັນຍາບັນຂອງສານທີ່ສອດຄ່ອງກັບຫຼັກການການປະພຶດຂອງ Bangalore
- ພິຈາລະນາຮັບຮອງແລະຈັດຕັ້ງປະຕິບັດນະໂຍບາຍທີ່ມີຄວາມອ່ອນໄຫວດ້ານບົດບາດຍິງຊາຍ ແລະຄຳແນະນຳອື່ນໆ
- ຍຶດໝັ້ນຄວາມທ່ຽງທຳຂອງສານໃນດ້ານຄວາມສະເໝີພາບທາງເພດສາກົນ ແລະ ຂອບວຽກການຕ້ານການສໍ້ລາດບັງຫຼວງ

## ຄວາມຮັບຜິດຊອບທາງດ້ານຕຸລາການສຳລັບບົດບາດຍິງຊາຍການປະພຶດຜິດ

- ຮັບຮອງເອົາມາດຕະຖານການປະພຶດຂອງຕຸລາການທີ່ຈະແຈ້ງ ແລະ ກຳນົດໃຫ້ຂໍ້ມູນດັ່ງກ່າວມີຢູ່ໃນຫຼາຍຊ່ອງທາງ
- ຫຼຸດຂັ້ນຕອນລົງ ຫຼື ກຳຈັດສິ່ງທີ່ເປັນອຸປະສັກຕໍ່ການລາຍງານການກະທຳຜິດຢູ່ໃນສານ
- ສ້າງຕັ້ງອົງການປະຕິບັດລະບຽບວິໄນເອກະ ລາດ ເພື່ອໄຕ່ສວນຄະດີຂອງການປະພຶດຜິດທາງຕຸລາການ
- ກຳນົດຂັ້ນຕອນຂອງລະບຽບວິໄນຢ່າງຈະແຈ້ງ
- ອະນຸຍາດໃຫ້ຜູ້ທີ່ເປັນພະຍານ ຫຼື ຜູ້ທີ່ຮັບຮູ້ກ່ຽວກັບການປະພຶດຜິດເພື່ອເລີ່ມຕົ້ນການສືບສວນ
- ປົກປ້ອງຄວາມລັບຂອງການສືບສວນ, ແຕ່ຕ້ອງມີຄວາມໂປ່ງໃສຕໍ່ກັບການຜົນລັບຂອງຄະດີ
- ຮັບປະກັນວ່າຂະບວນການຮ້ອງຮຽນມີຄວາມວ່ອງໄວ, ລະອຽດ ແລະ ຍຸຕິທຳ
- ສະໜອງການແກ້ໄຂໃຫ້ກວ້າງຂວາງພຽງພໍເພື່ອຈັດການກັບຄວາມຮ້າຍ
- ແຮງຂອງການປະພຶດໃນແຕ່ລະຄະດີ
- ສະໜອງຊັບພະຍາກອນໃຫ້ພຽງພໍເພື່ອປ້ອງກັນ, ຕິດຕາມ, ແກ້ໄຂການກະທຳຜິດກ່ຽວກັບບົດບາດຍິງຊາຍ
- ກຳນົດຄວາມອ່ອນໄຫວທາງດ້ານບົດບາດຍິງຊາຍດຊໍ້າໃນທຸກດ້ານຂອງລະບົບຍຸຕິທຳ
- ກຳນົດເອົາບັນຫາດ້ານບົດບາດຍິງຊາຍມາພິຈາລະນາແຕ່ງຕັ້ງຜູ້ພິພາກສາ ແລະ ຕິດຕາມ ແລະ ປະເມີນຜົນການປະຕິບັດໜ້າທີ່ຂອງພວກເຂົາ
- ຮວບຮວມຂໍ້ມູນ ແລະ ດຳເນີນການຄົ້ນຄ້ວາຢ່າງມີຂໍ້ມູນຫຼັກຖານເພື່ອກຳນົດບັນຫາທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ແລະ ສ້າງຍຸດທະສາດທີ່ມີປະສິດທິພາບໃນການແກ້ໄຂການປະພຶດທີ່ບໍ່ເໝາະສົມ.
- ດຳເນີນການກວດກາ ແລະ ປະເມີນຜົນຢ່າງເປັນປະຈຳວ່າຂະບວນການຮ້ອງຮຽນໄດ້ຜົນໄດ້ດີປານໃດ

## ການສຶກສາ ແລະ ການຝຶກອົບຮົມທາງດ້ານຕຸລາການທີ່ມີປະສິດທິພາບ

- ກຳນົດຫຼັກການພິຈາລະນາບັນຫາບົດບາດຍິງຊາຍເຂົ້າໄປໃນທຸກຂັ້ນຕອນຂອງການສຶກສາດ້ານກົດໝາຍ
- ການສຶກສາແລະການຝຶກອົບຮົມກ່ຽວກັບບັນຫາຄວາມຊື່ສັດທ່ຽງທຳທີ່ກ່ຽວຂ້ອງກັບບົດບາດຍິງຊາຍຄວນກຳນົດເປົ້າໝາຍທັງໝົດທີ່ຢູ່ໃນລະບົບຍຸຕິທຳ, ເຊັ່ນດຽວກັນກັບຊຸມຊົນຂະໜາດໃຫຍ່
- ຜູ້ພິພາກສາ ແລະ ຜູ້ພິພາກສາອາວຸໂສທີ່ຢູ່ໃນພາລະບົດບາດການຊີ້ນຳ ບໍ່ຄວນຊີ້ນຳພຽງແຕ່ແຕ່ຕືອຢ່າງ, ແຕ່ຄວນມີສ່ວນຮ່ວມໃນການຝຶກອົບຮົມພ້ອມ
- ບັນດາອົງການຕຸລາການຄວນດຳເນີນການຝຶກອົບຮົມກ່ຽວກັບບັນຫາຄວາມສັດຊື່ທ່ຽງທຳທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ເປັນພາກບັງຄັບໃນທຸກບ່ອນທີ່ເປັນໄປໄດ້
- ການຝຶກອົບຮົມດ້ານບົດບາດຍິງຊາຍຄວນຈະມີການສ່ວນຮ່ວມແລະເຫັນຄຸນຄ່າສຳລັບທັງຜູ້ຊາຍແລະແມ່ຍິງ
- ການຝຶກອົບຮົມຄວນມີຄວາມສົມບູນແບບ ແລະ ແກ້ໄຂບັນຫາຄວາມທ່ຽງທຳທີ່ກ່ຽວຂ້ອງກັບບົດບາດຍິງຊາຍຢ່າງເຕັມທີ່

- ການຝຶກອົບຮົມກ່ຽວກັບການຮ້ອງຮຽນຄວນຈະເປັນອົງປະກອບທີ່ສຳຄັນຂອງການຝຶກອົບຮົມກ່ຽວກັບບັນຫາຄວາມຊື່ສັດທີ່ກ່ຽວຂ້ອງກັບບົດບາດຍິງຊາຍ
- ການຝຶກອົບຮົມຄວນແກ້ໄຂທັດສະນະຄະຕິ, ພຶດຕິກຳແລະວັດທະນະທຳຂອງສະຖາບັນທີ່ອະນຸຍາດໃຫ້ການກະທຳຜິດທີ່ກ່ຽວຂ້ອງກັບບົດບາດຍິງຊາຍເກີດຂຶ້ນ
- ການຝຶກອົບຮົມກ່ຽວກັບການແຊກແຊງຂອງຜູ້ທີ່ຢູ່ໃນເຫດການຄວນລວມມີຢູ່ໃນຄວາມພະຍາຍາມທີ່ຈະແກ້ໄຂບັນຫາຄວາມຊື່ສັດທ່ຽງທຳທີ່ກ່ຽວຂ້ອງກັບບົດບາດຍິງຊາຍ
- ແຜນງານການສຶກສາແລະການຝຶກອົບຮົມຄວນໄດ້ຮັບການປະເມີນຜົນຢ່າງເປັນປົກກະຕິ, ນຳໃຊ້ວິທີການປະເມີນຜົນທີ່ຫຼາກຫຼາຍ ເພື່ອຮັບປະກັນຄວາມກ່ຽວຂ້ອງແລະ




UNDP

**United Nations Development Programme**
Bangkok Regional Hub
3rd Floor United Nations Service Building
Rajdamnern Nok Avenue, Phranakorn
Bangkok 10200 Thailand

www.asia-pacific.undp.org